MODULAR
SMALL-ARMS-CONTROL
IMPLEMENTATION COMPENDIUM

**MOSAIC**
**04.10**

Version 1.0
2016-04-22

# Designing and implementing a National Action Plan

ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ

The Modular **Small-arms-control** Implementation Compendium
MOSAIC
Good practices for safer societies.

Reference number
MOSAIC 04.10:2016(E)V1.0

© United Nations 2018

ເອກະສານສະບັບນີ້ ອາດບໍ່ແມ່ນສະບັບປັງປຸງຫຼ້າສຸດ.
ໂມດູລາ ການຈັດຕັ້ງປະຕິບັດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ (ໂມສາອິກ) ສະບັບປັບປຸງຫຼ້າສຸດ ແມ່ນສາມາດເຂົ້າເຖິງໄດ້ ໃນເວັບໄຊ:

**www.un.org/disarmament/salw**

ACKNOWLEDGEMENTS

This document — one in a series, comprising the Modular Small-arms-control Implementation Compendium (MOSAIC) — was produced by the United Nations in collaboration with a broad and diverse group of experts drawn from governments, international and regional organizations, civil society and the private sector.  A full list of contributors to the MOSAIC project is available on our website.

The production of MOSAIC was made possible by the financial support of the governments of Australia, Canada, Germany, Ireland, Norway and Switzerland, as well as by the United Nations Development Programme (UNDP), the United Nations Office for Disarmament Affairs (UNODA), the United Nations Children's Fund (UNICEF) and the United Nations Counter-Terrorism Committee Executive Directorate (CTED).

© United Nations 2018

All rights reserved.  This publication may be reproduced for non-profit educational and training purposes without special permission from the copyright holders, provided that the source is acknowledged.  The United Nations would appreciate receiving an electronic copy of any publication that uses this document as a source (conventionalarms-unoda@un.org).

This document is not to be sold.

สาລະບານ ໜ້າ


**ຄຳນຳ ……………………………………………………………………………………………v**

**ຄຳແນະນຳ ……………………………………………………………………………………vi**

**1 ຂອບເຂດ……………………………………………………………………………………1**

**2 ເອກະສານອ້າງອີງພື້ນຖານ…………………………………………………………………...1**

**3 ເງື່ອນໄຂ ແລະ ຄຳແນະນຳ……………………………………………………………………2**

**4 ຄຸນລັກສະນະຫຼັກຂອງແຜນປະຕິບັດງານແຫ່ງຊາດ…………………………………………………2**

4.1 ພາກທົ່ວໄປ………………………………………………………………………………..2

4.2 ຂອບເຂດ ແລະ ຄວາມເປັນເຈົ້າການລະດັບຊາດ…………………………………………………2

4.3 ລັກສະນະຮອບດ້ານ………………………………………………………………………3

**5 ບັນດາຫຼັກການແນະນຳ……………………………………………………………………3**

5.1 ພາກທົ່ວໄປ……………………………………………………………………………...3

5.2 ການເຂົ້າຮ່ວມ ແລະ ຄວາມກວມລວມ………………………………………………………..3

5.3 ຄວາມຍືນຍົງ……………………………………………………………………………4

5.4 ຄວາມກົມກຽວ…………………………………………………………………………4

5.5 ຄວາມຮອບດ້ານ…………………………………………………………………………4

5.6 ຄວາມຍືຢຸ່ນ……………………………………………………………………………..5

5.7 ຄວາມປອດໄພ…………………………………………………………………………..5

5.8 ຄວາມຫຼຸ່ດແຫຼ່ມຂອງຂໍ້ຂັດແຍ່ງ……………………………………………………………5

**6 ເປົ້າໝາຍ ແລະ ຈຸດປະສົງ…………………………………………………………………5**

6.1 ເປົ້າໝາຍ………………………………………………………………………………5

6.2 ຈຸດປະສົງ………………………………………………………………………………6

6.3 ຂອບເຂດ………………………………………………………………………………6

6.4 ໄລຍະເວລາ……………………………………………………………………………..6

6.5 ເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ…………………………………………………………7

**7 ບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນຫຼັກ……………………………………………8**

7.1 ພາກທົ່ວໄປ……………………………………………………………………………..8

7.2 ກົນໄກການປະສານງານແຫ່ງຊາດ…………………………………………………………8

7.3 ຂະແໜງການລັດຖະບານ………………………………………………………………….8

7.4 ສະມາຊິກລັດຖະສະພາ…………………………………………………………………..10

7.5 ພົນລະເຮືອນ…………………………………………………………………………...10

7.6 ອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອະນຸພາກພື້ນ…………………………………………10

7.7 ຜູ້ຊ່ຽວຊານດ້ານເຕັກນິກ…………………………………………………………………...11

8 ການກະກຽມ ແລະ ພື້ນຖານ……………………………………………………………….11

8.1 ການວາງແຜນຍຸດທະສາດ……………………………………………………………….11

8.2 ການຊີ້ນຳ-ນຳພາ………………………………………………………………………..11

8.3 ຂີດຄວາມສາມາດ………………………………………………………………………12

8.4 ງົບປະມານ……………………………………………………………………………………………13

**9 ການອອກແບບ ແລະ ການຈັດຕັ້ງປະຕິບັດ……………………………………………………………………....13**

9.1 ການເກັບກໍາຂໍ້ມູນ (ການສໍາຫຼວດ)………………………………………………………………………..13

9.2 ການວິເຄາະ ແລະ ໂຄງການພັດທະນາ……………………………………………………………………...13

9.3 ການໃຫ້ຄໍາປຶກສາ ແລະ ຄວາມເປັນເຈົ້າການ……………………………………………………………14

9.4 ເນື້ອໃນຂອງແຜນປະຕິບັດງານແຫ່ງຊາດ…………………………………………………………………...15

9.5 ການເຊື່ອມສານເຂົ້າໃນບັນດານະໂຍບາຍ, ໂຄງການ ແລະ ຂະບວນທີ່ກ່ຽວຂ້ອງ…………………………………………17

**10 ການຈັດຕັ້ງປະຕິບັດ…………………………………………………………………………………………19**

10.1 ການປະສານງານ ແລະ ສະຖາບັນ……………………………………………………………………………19

10.2 ການສົ່ງເສີມຄວາມຮັບຮູ້ຂອງສາທາລະນະ……………………………………………………………………20

**11 ການຕິດຕາມ, ການປະເມີນ ແລະ ການລາຍງານ………………………………………………………..……..20**

11.1 ພາກທົ່ວໄປ………………………………………………………………………………………………20

11.2 ການຕິດຕາມ……………………………………………………………………………………………..21

11.3 ການປະເມີນ……………………………………………………………………………………………..21

11.4 ການລາຍງານ……………………………………………………………………………………………..22

ເອກະສານຊ້ອນທ້າຍ A (informative) ຕົວຢ່າງ ກ່ຽວກັບຈຸດປະສົງໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ………………..23

ເອກະສານຊ້ອນທ້າຍ B (informative) ການພິຈາລະນາດ້ານງົບປະມານ……………………………………………………24

ເອກະສານຊ້ອນທ້າຍ C (informative) ຂອບເຂດພາກສ່ວນທີ່ສາມາດຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ………….………..25

ເອກະສານຊ້ອນທ້າຍ D (informative) ໂຄງຮ່າງແຜນປະຕິບັດງານແຫ່ງຊາດ…………………………………………………28

ເອກະສານອ້າງອີງ..……………………………………………………………………………………………29

# ຄໍານໍາ

### ໂມສາອິກ (MOSAIC) ແມ່ນຫຍັງ?

ໂມສາອິກ (MOSAIC) ແມ່ນຂະບວນການຫັນບັນດາຈຸດປະສົງຂອງບັນດາຂໍ້ຕົກລົງສາກົນ ທີ່ສໍາຄັນ ໃຫ້ເປັນຮູບປະທໍາ ໂດຍມີເປົ້າໝາຍສະກັດກັ້ນການຄ້າ, ການສະສົມ ແລະ ນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ, ບັນດາຂໍ້ຕົກລົງສາກົນດັ່ງກ່າວ ປະກອບມີ:

- ແຜນປະຕິບັດງານ ວ່າດ້ວຍການຄ້າອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ
- ນິຕິກໍາສາກົນ ວ່າດ້ວຍການຕິດຕາມກວດກາ
- ອະນຸສັນຍາ ວ່າດ້ວຍອາວຸດປືນ ທີ່ເສີມສ້າງໃຫ້ແກ່ສົນທິສັນຍາ ສປຊ ວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ
- ສັນຍາ ວ່າດ້ວຍການຄ້າອາວຸດ

ຫຼັກສູດໂມສາອິກ (MOSAIC) ແມ່ນອີງໃສ່ພາກປະຕິບັດທີ່ດີ, ກົດແຫ່ງການປະພຶດ ແລະ ຂັ້ນຕອນການດໍາເນີນງານມາດຕະຖານ ທີ່ໄດ້ຮັບການພັດທະນາໃນລະດັບອະນຸພາກພື້ນ ແລະ ພາກພື້ນ. ຫຼັກສູດດັ່ງກ່າວ ແມ່ນຖືກສ້າງຂຶ້ນໂດຍອົງການສະຫະປະຊາຊາດ (ສປຊ) ແລະ ຈາກການປະກອບສ່ວນຂອງບັນດານັກຊ່ຽວຊານຈາກທົ່ວໂລກ.

MOSAIC is a completely voluntary toolkit.

ໂມສາອິກ (MOSAIC) ແມ່ນຄູ່ມືໂດຍສະມັກໃຈຢ່າງສົມບູບແບບ.

ໂມສາອິກ (MOSAIC) ຊ່ວຍສະໜັບສະໜູນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ລວມທັງເປົ້າໝາຍ 16 ເພື່ອສົ່ງເສີມສັງຄົມທີ່ມີສັນຕິພາບ, ຄວາມຍຸຕິທໍາ ແລະ ຄວາມກວມລວມ, ແລະ ຄາດໝາຍ 16.4 ທີ່ປະກອບມີການຫຼຸດຜ່ອນການນໍາເຂົ້າ-ສົ່ງອອກອາວຸດທີ່ຜິດກົດໝາຍ.

### ໃຜສ້າງໂມສາອິກ (MOSAIC)?

ລັດຖະບານປະເທດຕ່າງໆ ສ່ວນຫຼາຍແມ່ນຮຽກຮ້ອງໃຫ້ອົງການສະຫະປະຊາຊາດ (ສປຊ) ໃຫ້ຄໍາແນະນໍາ ແລະ ການສະໜັບສະໜູນ ກ່ຽວກັບບັນຫາທີ່ຕິດພັນກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ - ລວມທັງບັນຫາທາງດ້ານນິຕິກໍາ, ແຜນປະຕິບັດງານ ແລະ ພາກປະຕິບັດ.

UN agencies decided that the best way to ensure that the United Nations as a whole could consistently deliver high-quality advice and support in response to such requests, was to develop international guidance on small arms and light weapons control, similar to the standards the UN developed in the areas of mine action (International Mine Action Standards – IMAS); disarmament, demobilization and reintegration (Integrated DDR Standards – IDDRS); and ammunition (International Ammunition Technical Guidelines – IATG).

ບັນດາອົງການເຄືອຂ່າຍຂອງອົງການສະຫະປະຊາຊາດ (ສປຊ) ໄດ້ເຫັນດີເປັນເອກະພາບກັນວ່າ ວິທີທີ່ດີທີ່ສຸດ ເພື່ອຮັບປະກັນໃຫ້ອົງການສະຫະປະຊາຊາດໂດຍລວມ ສາມາດໃຫ້ຄໍາແນະນໍາ ແລະ ການສະໜັບສະໜູນທີ່ມີຄຸນນະພາບສູງ ແລະ ແບບສະເໜີຕົ້ນສະເໜີປາຍຕໍ່ຂໍ້ສະເໜີດັ່ງກ່າວ ຄວນແມ່ນການສ້າງລະບຽບການສາກົນ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຄ້າຍຄືກັບບັນດາມາດຕະຖານ ທີ່ໄດ້ຖືກສ້າງຂຶ້ນໂດຍອົງການສະຫະປະຊາຊາດ (ສປຊ) ກ່ຽວກັບການເກັບກູ້ລູກລະເບີດ ((International Mine Action Standards – IMAS)); ການຫຼຸດຜ່ອນອາວຸດ (Integrated DDR Standards – IDDRS); ແລະ ລູກປືນ (International Ammunition Technical Guidelines – IATG).

ບົດສະຫຼຸບຫຍໍ້ນີ້ ແມ່ນໝາກຜົນຂອງການເຮັດວຽກ ແລະ ການປະສານງານຂອງອົງການສະຫະປະຊາຊາດ (ສປຊ) ເປັນເວລາ 10 ກວ່າປີ, ຊຶ່ງກວມເອົາ 24 ຂະແໜງການຂອງຄູ່ຮ່ວມມື ທີ່ມີຄວາມຊ່ຽວຊານໃນຫຼາກຫຼາຍຂົງເຂດ ນັບແຕ່ຂົງເຂດການພັດພັດທະນາ ແລະ ການຄຸ້ມ

© United Nations 2018 – All rights reserved

ຄອງອາວຸດ ຈົນໄປເຖິງ ການສົ່ງເສີມສິດສະເໝີພາບຍິງ-ຊາຍ ແລະ ສາທາລະນະສຸກ. ນອກນີ້, ຍັງມີການອ້າງອີງຂອງກຸ່ມຊ່ຽວຊານຈາກພາຍນອກ ທີ່ກວມເອົານັກຊ່ຽວຊານສະເພາະດ້ານ ຫຼາຍກວ່າ 300 ຄົນ ຈາກບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ພາກອຸດສາຫະກຳ ທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການສ້າງແຕ່ລະຫຼັກສູດ.

**ໃຜສາມາດນຳໃຊ້ ໂມສາອິກ (MOSAIC)?**

ລັດຖະບານ ແລະ ອົງການຈັດຕັ້ງໃດ ກໍສາມາດນຳໃຊ້ໂມສາອິກ (MOSAIC). ການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍອີງໃສ່ ໂມສາອິກ (MOSAIC) ຢ່າງຖືກຕ້ອງ ຈະຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ອາວຸດຈະຕົກໄປຢູ່ໃນກຳມືຂອງກຸ່ມກໍ່ອາຊະຍາກຳ, ກຸ່ມຕິດອາວຸດ, ກຸ່ມກໍ່ການຮ້າຍ ແລະ ກຸ່ມອື່ນໆ ທີ່ອາດຈະນຳໃຊ້ອາວຸດໃນທາງທີ່ຜິດ.

**ໂມສາອິກ (MOSAIC) ພາກປະຕິບັດທີ່ດີ ເພື່ອສ້າງສັງຄົມທີ່ປອດໄພ.**


© United Nations 2018 – All rights reserved

# ຄຳແນະນຳ

ການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ ອາດຈະເປັນສິ່ງທາທ້າຍທີ່ສະຫຼັບຊັບຊ້ອນຕໍ່ບັນດາລັດທີ່ໄດ້ຮັບຜົນກະທົບ, ຊຶ່ງຈະບໍ່ສາມາດແກ້ໄຂດ້ວຍຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຢ່າງດຽວເທົ່ານັ້ນ. ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແບບກວມລວມ, ກົມກຽວ ແລະ ຍືນຍົງ ໂດຍຄຳນຶ່ງເຖິງຂໍ້ຂັດແຍ່ງ ຈະສາມາດເປັນເຄື່ອງມືທີ່ມີປະສິດທິພາບໃນການແກ້ໄຂສິ່ງທາທ້າຍທີ່ສະຫຼັບຊັບຊ້ອນດັ່ງກ່າວ.

ໂດຍອີງໃສ່ຜົນ ແລະ ຂໍ້ສະເໜີແນະຈາກການສຳຫຼວດ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ (ກວດເບິ່ງ ໂມສາອິກ (MOSAIC) 05.10), ແຜນປະຕິບັດງານແຫ່ງຊາດ ແມ່ນພົວພັນກັບພາກສ່ວນສຳຄັນຕ່າງໆ ເຊັ່ນ: ລັດຖະບານ, ອົງການຈັດຕັ້ງພົນລະເຮືອນ ແລະ ວົງຄະນະຍາດສາກົນ - ເພື່ອບັນລຸເປົ້າໝາຍ ແບະ ຈຸດປະສົງ ທີ່ໄດ້ມີການກຳນົດໄວ້ຢ່າງຈະແຈ້ງ ແນໃສ່ຫຼຸດຜ່ອນຜົນກະທົບຕໍ່ສັງຄົມຈາກການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ.

© United Nations 2018 – All rights reserved 

# ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ

## 1 ຂອບເຂດ

ເອກະສານສະບັບນີ້ ໃຫ້ຄໍາແນະນໍາ ກ່ຽວກັບການອອກແບບ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນແຜນປະຕິບັດງານແຫ່ງຊາດ ເພື່ອສະກັດກັ້ນການຄ້າ, ການສະສົມ ແລະ ການນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ.

ເອກະສານສະບັບນີ້ ແມ່ນສ້າງຂຶ້ນສະເພາະເພື່ອໃຫ້ຄໍາແນະນໍາແກ່ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ທີ່ສະໜັບສະໜູນບັນດາລັດຖະບານ ໃນການສ້າງແຜນປະຕິບັດງານແຫ່ງຊາດ ເພື່ອຄຸ້ມຄອງວົງຈອນຊີວິດຂອງອາວຸດຂະໜາດນ້ອຍ ແລະ ເບົາ ຢ່າງມີປະສິດທິພາບ, ແຕ່ເອກະສານສະບັບນີ້ ຍັງອາດເປັນປະໂຫຍດໃຫ້ແກ່ອົງການຈັດຕັ້ງພາກພື້ນ ແລະ ສາກົນ, ອົງການຈັດຕັ້ງພົນລະເຮືອນ ແລະ ພາກເອກະຊົນ ໃນການໃຫ້ການສະໜັບສະໜູນໃນລັກສະນະດຽວກັນ. ເອກະສານສະບັບນີ້ ອາດຈະຖືກນໍາໃຊ້ໂດຍບັນດາລັດຖະບານຕ່າງໆ ໂດຍກົງ ເພື່ອແນະນໍາຂະບວນການສ້າງແຜນປະຕິບັດງານແຫ່ງຊາດ.

ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ສາມາດແກ້ໄຂຄວາມຮຸນແຮງດ້ານອາວຸດ ແລະ ຄວາມບໍ່ປອດໄພອື່ນທີ່ກ່ຽວຂ້ອງ ໃນສະພາບ ຕ່າງໆ, ລວມທັງການບໍ່ສາມາດຄຸ້ມຄອງອາວຸດທີ່ຄອບຄອງໂດຍພາກລັດ, ອາຊະຍາກໍາທາງອາວຸດ, urban gangs, ຂໍ້ຂັດແຍ່ງລະຫວ່າງຊົນເຜົ່າ ແລະ ຄວາມບໍ່ມີສະຖຽນລະພາບ ພາຍຫຼັງຂໍ້ຄັດແຍ່ງ.

ແຜນປະຕິບັດງານແຫ່ງຊາດ ສະມາດກວມເອົາວິທີຕ່າງໆໃນການຮັບມືກັບສິ່ງທາທ້າຍເຫຼົ່ານັ້ນ, ຊຶ່ງອາດລວມມີຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດ ໂດຍມີຈຸດປະສົງແກ້ໄຂການສະໜອງອາວຸດຂະໜາດນ້ອຍ ແລະ ເບົາ ກໍຄືຂໍ້ລິເລີ່ມ ວ່າດ້ວຍການພັດທະນາເສດຖະກິດ-ສັງຄົມແບບຮອບດ້ານ ໂດຍມີຈຸດປະສົງແກ້ໄຂຄວາມຕ້ອງການອາວຸດຂະໜາດນ້ອຍ ແລະ ເບົາ.

ແຜນປະຕິບັດງານແຫ່ງຊາດ ສາມາດໃຫ້ທິດຊີ້ນໍາທາງດ້ານຍຸດທະສາດ ສໍາລັບມາດຕະການສະກັດກັ້ນໃນບັນດາປະເທດ ທີ່ຍັງບໍ່ໄດ້ຮັບຜົນກະທົບຈາກການຄ້າ, ການສະສົມ ແລະ/ຫຼື ການນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ.

ເອກະສານສະບັບນີ້ ສຸມໃສ່ສະເພາະການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດແບບຮອບດ້ານ ແຕ່ຍັງສາມາດໃຫ້ຄໍາແນະນໍາທີ່ກ່ຽວຂ້ອງ ໃນການສ້າງແຜນງານ ເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ມີຈຸດສຸມ ແລະ ແທດເໝາະກັບສະພາບທ້ອງຖິ່ນ.

## 2 ເອກະສານອ້າງອີງພື້ນຖານ

ບັນດາເອກະສານອ້າງອີງຕໍ່ໄປນີ້ ແມ່ນມີຄວາມສໍາຄັນ ແລະ ມີຄວາມຈໍາເປັນໃນການຈັດຕັ້ງປະຕິບັດເອກະສານສະບັບນີ້. ສໍາລັບເອກະສານອ້າງອີງທີ່ມີເລກທີ ແມ່ນນໍາໃຊ້ເອກະສານສະບັບຈັດພິມ ທີ່ມີການອ້າງເຖິງເທົ່ານັ້ນ. ສໍາລັບເອກະສານອ້າງອີງທີ່ບໍ່ມີເລກທີ ແມ່ນນໍາໃຊ້ເອກະສານສະບັບຈັດພິມຫຼ້າສຸດ (ລວມທັງສະບັບປັບປຸງ).

ໂມສາອິກ (MOSAIC) 03.40, *ກົນໄກການປະສານງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ*

ໂມສາອິດ (MOSAIC) 04.30, *ການສົ່ງເສີມຄວາມເຂົ້າໃຈ ກ່ຽວກັບຄວາມຈໍາເປັນໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ*

© United Nations 2018 – All rights reserved

ໂມສາອິກ (MOSAIC) 04.40, *ການຕິດຕາມ, ການປະເມີນ ແລະ ການລາຍງານ*

ໂມສາອິກ (MOSAIC) 05.10, *ການດຳເນີນການສຳຫຼວດການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ*

## 3 ຂໍ້ກຳນົດ ແລະ ຄຳນິຍາດ

ເພື່ອຈຸດປະສົງຂອງເອກະສານສະບັບນີ້, ບັນດາຂໍ້ກຳນົດ ແລະ ຄຳນິຍາມ ໃນເອກະສານສະບັບເລກທີ ໂມສາອິກ (MOSAIC) 01.20, *ຄຳສັບ ແລະ ຄຳນິຍາມ, ແລະ ຂໍ້ກຳນົດລຸ່ມນີ້ ແມ່ນໃຊ້ປະຕິບັດຕໍ່ເອກະສານສະບັບນີ້:*

ໃນທຸກຫຼັກສູດຂອງໂມສາອິກ (MOSAIC), ຄຳສັບ "ຕ້ອງ" "ຄວນ" "ອາດສາມາດ" ແລະ "ສາມາດ" ແມ່ນຖືກນຳໃຊ້ ເພື່ອກຳນົດຂໍ້ບັງຄັບ ໂດຍສອດຄ່ອງກັບການໃຊ້ຄຳສັບໃນລະບົບມາດຕະຖານຂອງອົງການຈັດຕັ້ງສາກົນ ວ່າດ້ວຍມາດຕະຖານ (ISO).

ກ.) **ຄຳວ່າ "ຕ້ອງ" ຊີ້ບອກເຖິງຄວາມຈຳເປັນ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມສອດຄ່ອງກັບເອກະສານ ແລະ ບໍ່ອະນຸຍາດໃຫ້ໃຫ້ມີການຝ່າຝືນ.

ຂ.) **ຄຳວ່າ "ຄວນ" ຊີ້ບອກເຖິງຂໍ້ສະເໜີແນະ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງຂໍ້ສະເໜີແນະ ໂດຍສະເພາະແມ່ນຂໍ້ສະເໜີແນະທີ່ເໝາະສົມ ໃນບັນດາຂໍ້ເໜີຕ່າງໆທີ່ມີຄວາມເປັນໄປໄດ້, ໂດຍບໍ່ມີການເຈາະຈົງ ແລະ ຍົກເວັ້ນຂໍ້ສະເໜີແນະອື່ນໆ, ຫຼື ພາກການປະຕິບັດໃດໜຶ່ງ ທີ່ມີຄວາມເໝາະສົມກວ່າ ແຕ່ບໍ່ມີຄວາມຈຳເປັນ, ຫຼື (ການໃຊ້ຄຳສັບໃນລັກສະນະປະຕິເສດ) "ບໍ່ຄວນ" ໃນກໍລະນີມີຄວາມເປັນໄປໄດ້ ຫຼື ພາກການປະຕິບັດໃດໜຶ່ງ ທີ່ບໍ່ໄດ້ຮັບການຮັບຮອງ ແຕ່ບໍ່ໄດ້ຖືກຫວງຫ້າມ.

ຄ.) **ຄຳວ່າ "ສາມາດ" ຊີ້ບອກເຖິງການອະນຸຍາດ:** ເປັນການໃຊ້ຄຳສັບ ເພື່ອຊີ້ບອກເຖິງພາກການປະຕິບັດທີ່ໄດ້ຮັບການອະນຸຍາດ ພາຍໃຕ້ຂອບຈຳກັດຂອງເອກະສານ.

ງ.) **ຄຳວ່າ "ສາມາດເຮັດໄດ້" ຊີ້ບອກເຖິງຄວາມເປັນໄປໄດ້ ແລະ ຄວາມສາມາດ:** ເປັນການນຳໃຊ້ຄຳສັບ ເພື່ອເປັນການຢືນຢັນເຖິງຄວາມເປັນໄປໄດ້ ແລະ ຄວາມສາມາດ, ບໍ່ວ່າຈະແມ່ນໃນລັກສະນະທີ່ເປັນຮູບປະທຳ, ທາງກາຍະພາບ ຫຼື ແບບບໍ່ເປັນທາງການ.

## 4 ຄຸນລັກສະນະທີ່ສຳຄັນຂອງແຜນປະຕິບັດງານແຫ່ງຊາດ

### 4.1 ພາກທົ່ວໄປ

ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແມ່ນແຜນງານແບບຮອບດ້ານ ເພື່ອສະກັດກັ້ນ, ແກ້ໄຂ ແລະ ລົບລ້າງການຄ້າ, ການສະສົມ ແລະ ນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ ໃນລະດັບຊາດ ແລະ ເພື່ອແກ້ໄຂຜົນກະທົບທີ່ຕິດພັນກັບສັງຄົມ, ເສດຖະກິດ ແບະ ສິ່ງແວດລ້ອມ. ແຜນປະຕິບັດງານແຫ່ງຊາດ ອາດສາມາດຖືກຈັດຕັ້ງປະຕິບັດໃນໄລຍະສັ້ນ, ກາງ ຫຼື ຍາວ ແລະ ອາດລວມມີເປົ້າໝາຍໄລຍະສັ້ນ, ກາງ ແລະ ຍາວ.

ແຜນປະຕິບັດງານແຫ່ງຊາດ ສະໜອງເຄື່ອງມືທີ່ມີປະສິດທິພາບ ໃນການສ້າງຍຸດທະສາດແບບກວ້າງຂວາງ, ກົມກຽວ ແລະ ກວມລວມ ເພື່ອແກ້ໄຂສິ່ງທ້າທາຍ, ບັນຫາຊັບຊ້ອນ ທີ່ຕິດພັນກັບການກໍ່ຄວາມຮຸນແຮງ ແລະ ຄວາມບໍ່ປອດໄພ ທີ່ຕິດພັນກັບອາວຸດຂະໜາດນ້ອຍ ແລະ ເບົາ.

### 4.2 ຂອບເຂດ ແລະ ການເປັນເຈົ້າການລະດັບຊາດ

ແຜນປະຕິບັດງານແຫ່ງຊາດ ຄວນມີການກຳນົດຂອບເຂດລະດັບຊາດ ແລະ ຄວນ

ກ) ແກ້ໄຂບັນຫາຕ່າງໆທີ່ຕິດພັນກັບການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍໃນທົ່ວປະເທດ ແທນທີ່ຈະສຸມໃສ່ຂົງເຂດໃດໜຶ່ງທີ່ສະເພາະ, ໂດຍຄຳນຶງເຖິງບັນດາສິດອະທິປະໄຕ;

ຂ) ລວມເອົາບັນດາຂໍ້ລິເລີ່ມລະດັບຊາດ, ອະນຸພາກພື້ນ (ຕົວຢ່າງ: ພາກພື້ນ) ແລະ ທ້ອງຖິ່ນ, ແລະ ຖ້າເຫັນວ່າ ມີຄວາມເໝາະສົມ, ກໍອາດລວມບັນດາໂຄງການທົດລອງ; ແລະ

 © United Nations 2018 – All rights reserved

ງ) ຖືກຮັບຮອງໂດຍລັດຖະບານຂອງ ລັດທີ່ຈະຈັດຕັ້ງປະຕິບັດແຜນປະຕິບັດງານດັ່ງກ່າວ.

ຂັ້ນຕອນໃນການອອກແບບ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນແຜນການປະຕິບັດງານແຫ່ງຊາດ ຄວນນຳພາໂດຍລັດຖະບານ, ໂດຍມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງອົງການຈັດຕັ້ງພົນລະເຮືອນ. ສາມາດເຊີນບັນດາອົງການຈັດຕັ້ງພາກພື້ນ ແລະ/ຫຼື ສາກົນ ເຊັ່ນ: ອົງການສະຫະປະຊາຊາດ, ເຂົ້າຮ່ວມ ເພື່ອສະໜັບສະໜູນຂັ້ນຕອນດັ່ງກ່າວ.

ລັດຖະບານ ອາດສາມາດແຕ່ງຕັ້ງຄູ່ຮ່ວມພາກພື້ນ ຫຼື ສາກົນ ເພື່ອຫຼິ້ນບົດບາດໃນການນຳພາໜຶ່ງໃນຂົງເຂດ, ຫຼາຍກວ່າໜຶ່ງ ຫຼື ທຸກຂົງເຂດຂອງແຜນປະຕິບັດງານແຫ່ງຊາດ. ໃນກໍລະນີດັ່ງກ່າວ, ການແຕ່ງຕັ້ງລັກສະນະດັ່ງກ່າວ ຈະບໍ່ສົ່ງຜົນຕໍ່ຫຼັກການການເປັນເຈົ້າການລະດັບຊາດ.

## 4.3 ຄຸນລັກສະນະແບບຮອບດ້ານ

ມີຫຼາກຫຼາຍປັດໃຈ ທີ່ອາດຈະສົ່ງຜົນເຮັດໃຫ້ມີການຄ້າ, ການສະສົມ ແລະ/ຫຼື ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ ໃນບາງປະເທດສະເພາະ, ເນື່ອງຈາກວ່າ ບັນຫາໃນປະເທດໃດໜຶ່ງສະເພາະ ອາດມີຄວາມສະຫຼັບຊັບຊ້ອນ, ຊຶ່ງຈຳເປັນຕ້ອງມີການຮັບມືລະອຽດອ່ອນ ແລະ ຮອບດ້ານ. ແຜນປະຕິບັດງານແຫ່ງຊາດ ຄວນຄຳນຶ່ງເຖິງຄວາມສະຫຼັບຊັບຊ້ອນ ແລະ ຄວນມີລັກສະນະຮອບດ້ານ ເວົ້າສະເພາະແຜນປະຕິບັດງານແຫ່ງຊາດ ຄວນ

ກ) ເອົາບັນດາຜົນ ແລະ ຂໍ້ສະເໜີແນະ ຈາກການສຳຫຼວດລະດັບຊາດ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ ເປັນຈຸດເລີ່ມຕົ້ນ, ໂດຍສອດຄ່ອງກັບໂມສາອິກ (MOSAIC) 05.10, *ການສຳຫຼວດ ກ່ຽວກັບອາວຸດຂະໜາດນ້ອຍ ແລະ ເບົາ;*

ຂ) ແທດເໝາະກັບລັດ ທີ່ໄດ້ສ້າງແຜນປະຕິບັດງານແຫ່ງຊາດສະເພາະ

ຄ) ຖືກອອກແບບ ໂດຍຄຳນຶ່ງເຖິງຄວາມເປັນໄປໄດ້ໃນທຸກໆດ້ານຂອງການສ້າງຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ; ແລະ

ງ) ສົ່ງເສີມການຮັບມືໂດຍມີການເຂົ້າຮ່ວມຂອງທຸກພາກສ່ວນຂອງລັດຖະບານ ໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ແລະ ສະກັດກັ້ນຄວາມຮຸນແຮງທາງດ້ານອາວຸດ.

# 5 ຫຼັກການແນະນຳ

## 5.1 ພາກທົ່ວໄປ

ການອອກແບບ ແລະ ການຈັດຕັ້ງຜະຕິບັດແຜນປະຕິບັດງານແຫ່ງຊາດ ຄວນອີງໃສ່ບັນດາຫຼັກການແນະນຳຕໍ່ໄປນີ້.

## 5.2 ການເຂົ້າຮ່ວມ ແລະ ການມີສ່ວນຮ່ວມແບບກວມລວມ

ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຄວນປະກອບມີທຸກພາກສ່ວນ ທີ່ມີຜົນປະໂຫຍດອັນຊອບທຳໃນຂະບວນການ. ພາກສ່ວນເຫຼົ່ານີ້ ອາດສາມາດປະກອບມີ

ກ) ພາກສ່ວນທີ່ໄດ້ຮັບຜົນກະທົບຈາກການຄ້າ, ສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ;

ຂ) ພາກສ່ວນທີ່ມີສ່ວນຮ່ວມໃນການຜະລິດ ແລະ ການຄ້າອາວຸດຂະໜາດນ້ອຍ ແລະ ເບົາ ພາຍໃນ ແລະ ສາກົນ ທີ່ຖືກກົດໝາຍ;

ຄ) ພາກສ່ວນທີ່ເຮັດວຽກກ່ຽວຂ້ອງກັບການຮັບປະກັນການນຳໃຊ້ອາວຸດປືນ ໃຫ້ຖືກກົດໝາຍ, ແບບມີຄວາມຮັບຜິດຊອບ ແລະ ປອດໄພ, ລວມທັງອົງການຈັດຕັ້ງພົນລະເຮືອນ, ອົງການລ່າສັດ ແລະ ກິລາຍິງປືນ, ແລະ ອື່ນໆ; ແລະ

ງ) ພາກສ່ວນທີ່ມີຄວາມສາມາດປະກອບສ່ວນ ເພື່ອຜົນສຳເລັດຂອງຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

© United Nations 2018 – All rights reserved

ຄວນຄັດເລືອກເອົາຄູ່ຮ່ວມຈາກພາກສ່ວນລະດັບຊາດ, ແຂວງ, ເມືອງ ແລະ ຊຸມຊົນ. ການເຂົ້າຮ່ວມຢ່າງຕັ້ງໜ້າ ແລະ ມີຄວາມໝາຍຂອງບັນດາຜູ້ຕາງໜ້າ ທີ່ມີຄວາມຫຼາກຫຼາຍຈາກພາກສ່ວນກ່ຽວຂ້ອງ ແມ່ນມີຄວາມສຳຄັນໃນການສ້າງຈິດສຳນຶກຮ່ວມຂອງຄວາມເປັນເຈົ້າການ, ຊຶ່ງມີຄວາມສຳຄັນຕໍ່ຜົນສຳເລັດ ແລະ ຄວາມຍືນຍົງຂອງແຜນປະຕິບັດງານແຫ່ງຊາດ.

ຄວນຮັບຮອງເອົາວິທີການທີ່ໂປ່ງໃສ ແລະ ເປີດກ້ວາງ ໃນການແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງກັບແຜນປະຕິບັດງານແຫ່ງຊາດ.

ແຜນປະຕິບັດງານແຫ່ງຊາດ ຄວນສົ່ງເສີມການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາຢ່າງເທົ່າທຽມ ໂດຍບໍ່ມີການຈຳແນກບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ. ສິດ ແລະ ຄວາມຕ້ອງການຂອງພົນລະເຮືອນທຸກຄົນ ຄວນເປັນຕົວກຳນົດການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງກຳນົດບູລິມະສິດ ແມ່ນຄວນດຳເນີນໂດຍບໍ່ຈຳແນກບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ.

ແຜນປະຕິບັດງານແຫ່ງຊາດ ຕ້ອງສະທ້ອນໃຫ້ເຫັນເຖິງຄວາມຕ້ອງການຂອງພາກສ່ວນທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງ ແລະ ຄວາມບໍ່ໝັ້ນຄົງດ້ານອາວຸດຂະໜາດນ້ອຍ ແລະ ເບົາ, ໂດຍສະເພາະແມ່ນຄວາມຕ້ອງການຂອງເດັກນ້ອຍ, ໄວໜຸ່ມ ແລະ ຊາວໜຸ່ມ.  ແຜນປະຕິບັດງານແຫ່ງຊາດ ຕ້ອງຮັບຮູ້ ແລະ ແກ້ໄຂຄວາມຕ້ອງການ, ປະສົບການ ແລະ ບົດບາດທີ່ແຕກຕ່າງກັນຂອງຍິງ-ຊາຍ, ເດັກນ້ອຍຍິງ-ຊາຍ ກ່ຽວກັບຄວາມຮຸນແຮງ ແລະ ຄວາມບໍ່ໝັ້ນຄົງດ້ານອາວຸດຂະໜາດນ້ອຍ ແລະ ເບົາ, ແລະ ການແກ້ໄຂບັນຫາດັ່ງກ່າວ.

ຂະບວນການໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຕ້ອງຂຶ້ນກັບການຮ່ວມມື ລະຫວ່າງບັນດາກົມ, ຂະແໜງການ, ອົງການຈັດຕັ້ງ, ບໍລິສັດເອກະຊົນ ແລະ ບຸກຄົນ; ແລະ ການຮ່ວມມືໃນທຸກລະດັບ.

**ໝາຍເຫດ:** ປະສິດທິພາບຂອງແຜນປະຕິບັດງານແຫ່ງຊາດ ອາດສາມາດຖືກກຳນົດໃນສ່ວນໃດໜຶ່ງ ໂດຍລະດັບ ແລະ ຮູບແບບການຮ່ວມມື. ການຮ່ວມມືດັ່ງກ່າວ ອາດມີຄວາມສຳຄັນ ລະຫວ່າງຂະແໜງການພາກລັດ, ລະຫວ່າງຂະແໜງການພາກລັດ ແລະ ອົງການຈັດຕັ້ງພົນລະເຮືອນ, ແລະ ລະຫວ່າງຂະແໜງການພາກລັດ ແລະ ພາກສ່ວນສາກົນ (ປະເທດເພື່ອນບ້ານ, ລັດທີ່ໃຫ້ການສະໜັບສະໜູນ, ອົງການຈັດຕັ້ງສາກົນ ແລະ ອື່ນໆ).

## 5.3 ຄວາມຍືນຍົງ

ເຄື່ອງມື ທີ່ຖືກນຳສະເໜີໂດຍແຜນປະຕິບັດງານແຫ່ງຊາດ ໃນການແກ້ໄຂຜົນກະທົບທາງລົບຈາກການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ ຄວນແກ້ໄຂວິກິດໄລຍະສັ້ນ ກໍຄືບັນຫາໄລຍະຍາວ. ແຜນປະຕິບັດງານແຫ່ງຊາດ ຄວນຖືກອອກແບບ ເພື່ອຂັບເຄື່ອນການປ່ຽນແປງຂອງທັດສະນະ ແລະ ການປະຕິບັດ ທີ່ສາມາດດຳເນີນໃນໄລຍະຍາວ, ສາມາດຄົງຢູ່ເໜືອກວ່າອາຍຸຂອງແຜນປະຕິບັດງານດັ່ງກ່າວ. ການພັດທະນາຂີດຄວາມສາມາດລະດັບຊາດ ແລະ ທ້ອງຖິ່ນ ຕ້ອງເປັນເນື້ອໃນຫຼັກຂອງແຜນປະຕິບັດງານແຫ່ງຊາດ, ຊຶ່ງຄວນ

ກ) ອີງໃສການເມີນແທ້ຈິງຂອງທ່າແຮງ ແລະ ຂີດຄວາມສາມາດຂອງບຸກຄະລາກອນ ແລະ ເຄື່ອງມື ໃນການສະໜັບສະໜູນການຈັດຕັ້ງປະຕິບັດແຜນ;

ຂ) ພິຈາລະນາການພັດທະນາຂີດຄວາມສາມາດ ໃນທຸກພາກສ່ວນ ເພື່ອໃຫ້ສາມາດຕອບສະໜອງຄວາມຕ້ອງໄລຍະສັ້ນ ແລະ ຍາວແນວໃດ;

ຄ) ສຸມເວລາ ແລະ ຊັບພະຍາກອນເຂົ້າໃນການພັດທະນາຂີດຄວາມສາມາດລະດັບຊາດ ແລະ ທ້ອງຖິ່ນ; ແລະ

ງ) ນຳສະເໜີຜົນປະໂຫຍດ ທີ່ເກີນຄ່າໃຊ້ຈ່າຍ (ດ້ານການເງິນ ແລະ ສັງຄົມ) ໃນການຈັດຕັ້ງປະຕິບັດແຜນ.

## 5.4 ຄວາມກົມກຽວ

ແຜນປະຕິບັດງານແຫ່ງຊາດ ຄວນອີງໃສ່ການປະເມີນທີ່ຖືກຕ້ອງ ແລະ ແທ້ຈິງ ກ່ຽວກັບສະພາບການແຫ່ງຊາດ ແລະ ຄວາມຕ້ອງການ ທີ່ກ່ຽວຂ້ອງກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ໂດຍຄຳນຶ່ງເຖິງປະເພນີ ແລະ ທັດສະນະຕໍ່ກັບອາວຸດຂະໜາດນ້ອຍ ແລະ ເບົາ ແລະ ການນຳໃຊ້ທີ່ຖືກຕ້ອງຕາມກົດໝາຍ.

ເພື່ອເປັນການຮັບປະກັນຄວາມກົມກຽວ, ແຜນປະຕິບັດງານແຫ່ງຊາດ ຄວນຄຳນຶ່ງເຖິງບັນດານະໂຍບາຍ, ໂຄງການ ແລະ ຂະບວນການຕ່າງໆທີ່ກ່ຽວຂ້ອງ ແນໃສ່ສົ່ງເສີມໂອກາດໃນການຮ່ວມມື ແລະ ແລກປ່ຽນຊັບພະຍາກອນ.

ຖ້າມີຄວາມເປັນໄປໄດ້, ແຜນປະຕິບັດງານແຫ່ງຊາດ ຄວນເຊື່ອມສານເຂົ້າໃນ ຫຼື ສອດຄ່ອງກັບຍຸດທະສາດເພື່ອການພັດທະນາ, ແລະ ຍຸດທະສາດ ແລະ ໂຄງການເພື່ອການປັບປຸງລະບົບຄວາມປອດໄພ.


© United Nations 2018 – All rights reserved

## 5.5 ຄວາມຮອບດ້ານ

ແຜນປະຕິບັດງານແຫ່ງຊາດ ຄວນຖືກອອກແບບ ເພື່ອແກ້ໄຂຜົນກະທົບຈາກການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ຢ່າງຮອບດ້ານ ເທົ່າທີ່ເປັນໄປໄດ້. ໃນປະເທດທີ່ໄດ້ຮັບຜົນກະທົບ, ບັນຫາອາວຸດຂະໜາດນ້ອຍ ອາດແມ່ນບັນຫາທີ່ມີຄວາມສະຫຼັບຊັບຊ້ອນ ແລະ ອາດຈຳເປັນຕ້ອງມີຫຼາຍກິດຈະກຳ ເພື່ອແກ້ໄຂບັນຫາດັ່ງກ່າວ ຢ່າງມີປະສິດທິພາບ. ສະນັ້ນ, ແຜນປະຕິບັດງານແຫ່ງຊາດ ຄວນກວມເອົາຫຼາຍກິດຈະກຳທີ່ກວມຫຼາຍຂົງເຂດ ເພື່ອສົ່ງເສີມການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຢ່າງມີປະສິດທິພາບ, ພ້ອມທັງຮັບປະກັນການວາງເປົ້າໝາຍ ແລະ ຈຸດປະສົງ ທີ່ສາມາດບັນລຸໄດ້.

## 5.6 ຄວາມຍືດຍຸ່ນ

ໃນການອອກແບບ, ແຜນປະຕິບັດງານແຫ່ງຊາດ ຄວນສະທ້ອນໃຫ້ເຫັນເຖິງສະພາບການທີ່ເປັນເອກະລັກຂອງປະເທດ ທີ່ຈະຈັດຕັ້ງປະຕິບັດແຜນດັ່ງກ່າວ. ໂຄງຮ່າງ, ປະສົບການ ແລະ ພາກປະຕິບັດທີ່ມີປະສິດທິພາບຈາກປະເທດຕ່າງໆ ອາດສາມາດເອົາມາໝູນໃຊ້, ແຕ່ຄວນໄດ້ຮັບການປັບປຸງໃຫ້ແທດເໝາະກັບສະພາບຂອງປະເທດ ທີ່ຈະອອກແບບແຜນປະຕິບັດ.

ໃນການຈັດຕັ້ງປະຕິບັດ, ແຜນປະຕິບັດງານ ຄວນຕອບສະໜອງຕໍ່ການປ່ຽນແປງຂອງສະພາບການ ແລະ ລວມມີບັນດາກົນໄກ ເພື່ອຕິດຕາມ ແລະ ປະເມີນແຕ່ລະໄລຍະ. ການຮັບຮອງເອົາທັດສະນະທີ່ຍືດຍຸ່ນ - ທັດສະນະທີ່ເປີດກ້ວາງຮັບເອົາແນວຄວາມຄິດໃໝ່ ແລະ ຕອບສະໜອງຕໍ່ການປ່ຽນແປງຂອງສະພາບການໃນພື້ນທີ່ຕົວຈິງ - ຈະເປັນປັດໄຈສຳຄັນໃນການຮັບປະກັນຜົນສຳເລັດໃນການຈັດຕັ້ງປະຕິບັດ.

ແຜນປະຕິບັດງານແຫ່ງຊາດ, ໂດຍຄຸນລັກສະນະ ແລະ ຂອບເຂດລະດັບຊາດ, ແມ່ນມີການຄາດຄະເນລ່ວງໜ້າ ກ່ຽວກັບຂອບເຂດຂອງການຊີ້ນຳສູນກາງ ແລະ ການມີສ່ວນຮ່ວມຂອງລັດຖະບານ. ໃນສ່ວນໜຶ່ງ, ການສ້າງ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ແມ່ນຂັ້ນຕອນຈາກເທິງລົງລຸ່ມ; ເນື່ອງຈາກວ່າ ການສ້າງແຜນການຮັບມືທົ່ວປະເທດ ແມ່ນມີຈຸດປະສົງແກ້ໄຂບັນຫາທີ່ສົ່ງຜົນກະທົບຕໍ່ປະເທດໂດຍລວມ.

ຢ່າງໃດກໍຕາມ, ຂະບວນການໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ໃນຂະນະດຽວກັນຄວນສ່ອງແສງເຖິງຄວາມຫຼາກຫຼາຍຂອງຄວາມຕ້ອງການ, ປະສົບການ ແລະ ຂີດຄວາມສາມາດໃນລະດັບທ້ອງຖິ່ນໃນທົ່ວປະເທດ. ການລະບຸບັນຫາ ແລະ ວິທີການແກ້ໄຂຕ່າງໆ, ການອອກແບບັນດາກິດຈະກຳສະເພາະເຂດຊຸມຊົນທ້ອງຖິ່ນ ແລະ ການນຳພາໃນການຈັດຕັ້ງປະຕິບັດບັນດາກິດຈະກຳ ເຫຼົ່ານີ້ຄວນມາຈາກຊຸມຊົນທ້ອງຖິ່ນ. ສະນັ້ນ, ແຜນປະຕິບັດງານແຫ່ງຊາດ ຄວນເປັນປະກອບດ້ວຍຮູບແບບຈາກເທິງລົງລຸ່ມ ແລະ ລຸ່ມຂຶ້ນເທິງ.

## 5.7 ຄວາມປອດໄພ

ອາວຸດຂະໜາດນ້ອຍ, ເບົາ ແລະ ລູກປືນ ແມ່ນສິ່ງອັນຕະລາຍ (ຕົວຢ່າງ: ແມ່ນແຫຼ່ງຂອງຄວາມອັນຕະລາຍ). ເຊັ່ນດຽວກັນ, ຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາບາງຢ່າງ (ຕົວຢ່າງ: ໂຄງການການສຳຫຼວດ ຫຼື ເກັບກຳຂໍ້ມູນ) ອາດເຮັດໃຫ້ຜູ້ຈັດງານ ແລະ ຜູ້ເຂົ້າຮ່ວມຢູ່ໃນຄວາມອັນຕະລາຍ. ຜູ້ທີ່ອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ມີໜ້າທີ່ປົກປ້ອງປະຊາຊົນທ້ອງຖິ່ນ ແລະ ຜູ້ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາກິດຈະກຳຢ່າງປອດໄພ.

## 5.8 ຄວາມຫລໍ່ແຫຼມຂອງຂໍ້ຂັດແຍ່ງ

ແຜນປະຕິບັດງານແຫ່ງຊາດ ຄວນສ້າງຂຶ້ນຫຼັງຈາກທີ່ມີການປະເມີນຄວາມເປັນໄປໄດ້ ຫຼື ເຫດຜົນຂອງຂໍ້ຂັດແຍ່ງ ຖ້າມີຄວາມຈຳເປັນ.

ແຜນປະຕິບັດງານ ຕ້ອງຖືກອອກແບບ ເພື່ອຫຼຸດຜ່ອນຜົນກະທົບດ້ານລົບຈາກການຈັດຕັ້ງປະຕິບັດ ທີ່ອາດເປັນໄປໄດ້ ຕໍ່ ຄວາມຫລໍ່ແຫຼມຂອງຂໍ້ຂັດແຍ່ງ (ຕົວຢ່າງ: ຂໍ້ຂັດແຍ່ງລະຫວ່າງຊຸມຊົນ, ຂໍ້ຂັດແຍ່ງດ້ານຊັບພະຍາກອນ, ອື່ນໆ), ລວມທັງການສວາຍໃຊ້ໂອກາດ ເພື່ອສົ່ງເສີມການຄຸ້ມຄອງ ຫຼື ການແກ້ໄຂຂໍ້ຂັດແຍ່ງ.

ຖ້າມີຄວາມຈຳເປັນ, ຄວນດຳເນີນການປະເມີນຂໍ້ຂັດແຍ່ງ ໃນໄລຍະການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ແລະ ປັບປຸງບັນດາໂຄງການເພື່ອແກ້ ອີງຕາມຄວາມຈຳເປັນ.

© United Nations 2018 – All rights reserved

# 6 ເປົ້າໝາຍ ແລກ ຈຸດປະສົງ

## 6.1 ເປົ້າໝາຍ

ແຜນປະຕິບັດງານແຫ່ງຊາດ ຕ້ອງມີເປົ້າໝາຍ ທີ່ຈະແຈ້ງ, ສາມາດບັນລຸ ແລະ ວັດແທກໄດ້. ມີປັດໄຈຈຳນວນໜຶ່ງ ອາດສາມາດອະທິບາຍໃຫ້ຮູ້ວ່າ ເປົ້າໝາຍເຫຼົ່ານີ້ ຖືກກຳນົດແນວໃດ.

ຜົນ ແລະ ຂໍ້ສະເໜີແນະຈາກການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາແບບຮອບດ້ານ - ທີ່ຖືກດຳເນີນໂດຍສອດຄ່ອງກັບໂມສະອິກ (MOSAIC) 05.10 - ຕ້ອງເປັນປັດໄຈຫຼັກໃນການກຳນົດເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ.

ເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ ຄວນສອດຄ່ອງກັບບັນດານະໂຍບາຍ ແລະ ໂຄງການຂອງລັດຖະບານທີ່ມີຢູ່ ຫຼາຍເທົ່າທີ່ຈະຫຼາຍໄດ້, ກໍຄືຄວາມໝາຍໝັ້ນພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງ.

## 6.2 ຈຸດປະສົງ

ແຜນປະຕິບັດງານແຫ່ງຊາດ ຕ້ອງກຳນົດຈຸດປະສົງດ້ານຍຸດທະສາດສະເພາະ ທີ່ສາມາດບັນລຸໄດ້ດ້ວຍການຈັດຕັ້ງປະຕິບັດແຜນປະຕິບັດງານດັ່ງກ່າວ. ຈຸດປະສົງດ້ານຍຸດທະສາດ ຕ້ອງໄດ້ມີການກຳນົດຢ່າງຈະແຈ້ງ, ສາມາດບັນລຸໄດ້ ແລະ ວັດແທກໄດ້ ໂດຍການນຳໃຊ້ຕົວຊີ້ບອກປະສິດທິພາບທີ່ເໝາະສົມ (ເບິ່ງຄືນ ຂໍ້ທີ 11). ຜົນສຳເລັດໃນການບັນລຸຈຸດປະສົງດ້ານຍຸດທະສາດຮ່ວມກັນ ແມ່ນການການບັນລຸເປົ້າໝາຍລວມຂອງແຜນປະຕິບັດງານ.

ໝາຍເຫດ: ຈຸດປະສົງດ້ານມະນຸດສະທຳ ກຳນົດໄວ້ໃນແຜນປະຕິບັດງານຕ່າງໆ ອາດມີຄວາມແຕກຕ່າງກັນໃນລະດັບລະດັບໜຶ່ງ. ສະນັ້ນ, ມັນເປັນໄປບໍ່ໄດ້ ຫຼື ມີ ເປັນສິ່ງທີ່ປາຖະໜາ ທີ່ຕ້ອງມີການກຳນົດຈຸດປະສົງດ້ານຍຸດມທະສາດຢ່າງລະອຽດຖີ່ຖ້ວນ. ເພື່ອການແນະນຳ, ເອກະສານຊ້ອນທ້າຍ A ນຳສະເໜີບັນຊີຈຸດປະສົງ ສຳລັບໂຄງການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

## 6.3 ຂອບເຂດ

ແຜນປະຕິບັດງານແຫ່ງຊາດ ຄວນຖືເປັນໂຄງການ ທີ່ມີຄວາມກ້ວາງຂວາງ ເພື່ອສະກັດກັ້ນ ແລະ ແກ້ໄຂຜົນກະທົບທີ່ເກີດຈາກການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ. ແຜນປະຕິບັດງານດັ່ງກ່າວ ທີ່ອີງໃສ່ການປະເມີນແບບຮອບດ້ານກ່ຽວກັບບັນຫາອາວຸດຂະໜາດນ້ອຍ ແລະ ເບົາ ຄວນຄຳນຶງເຖິງວິທີການຮັບມືຢ່າງກ້ວາງຂວາງທີ່ເປັນໄປໄດ້. ການຮັບມືຕ່າງໆ ອາດສາມາດ

ກ) ແກ້ໄຂປັດໄຈທາງການເມືອງ, ສັງຄົມ ແລະ ເສດຖະກິດ;

ຂ) ປະກອບມີພາກສ່ວນຕ່າງໆຈາກພາກລັດຖະບານ, ອົງການຈັດຕັ້ງພາກພື້ນ ແລະ ສາກົນ, ແລະ ອົງຈັດຕັ້ງພົນລະເຮືອນ (ລະດັບຊາດ, ແຂວງ, ເມືອງ ແລະ ທ້ອງຖິ່ນ), ເຮັດວຽກຢ່າງມີເອກະລາດ ຫຼື ຮ່ວມກັນ;

ຄ) ສຸມໃສ່ລະດັບຊາດ, ແຂວງ, ເມືອງ ແລະ ທ້ອງຖິ່ນ, ໃນຂະນະດຽວກັນ, ແຜນປະຕິບັດງານ ຄວນສອດຄ່ອງກັບສະພາບການພາກພື້ນ ແລະ ສາກົນ;

ງ) ປະກອບມີຂໍ້ລິເລີ່ມ ວ່າດ້ວຍການພັດທະນາ ແລະ ການຄຸ້ມຄອງອາວຸດທາງດ້ານເຕັກນິກ (ສົ່ງເສີມການເຊື່ອມສານ ລະຫວ່າງ 2 ຂໍ້ລິເລີ່ມດັ່ງກ່າວ, ຖ້າມີຄວາມເປັນໄປໄດ້).

**ໝາຍເຫດທີ 1:** ໃນນີ້, ຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດທາງດ້ານເຕັກນິກ ແມ່ນໝາຍເຖິງ ບັນດາກິດຈະກຳ ເຊັ່ນ: ການສະສົມ ແລະ ການທຳລາຍ, ການຄຸ້ມຄອງການສະສົມ ແລະ ຄວາມພະຍາຍາມທາງດ້ານນິຕິກຳ ແລະ ກົດລະບຽບ. ຂໍ້ລິເລີ່ມ ວ່າດ້ວຍການພັດທະນາ ແມ່ນໝາຍເຖິງ ມາດຕະການທີ່ກ້ວາງຂວາງ ສຸມໃສ່ອາວຸດ ໂດຍກົງ. ຂໍ້ລິເລີ່ມດັ່ງກ່າວ ອາດລວມມີໂຄງການສົ່ງເສີມຄວາມເຂົ້າໃຈ ແລະ ການສຶກສາ, ແລະ ເສດຖະກິດ-ສັງຄົມ ໃນຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງທາງດ້ານອາວຸດ.

**ໝາຍເຫດທີ 2:** ເຖິງແມ່ນວ່າ ແຜນປະຕິບັດງານແຫ່ງຊາດ ອາດຈະອ່ຽງໄປທາງຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດທາງດ້ານເຕັກນິກ ຫຼື ຂໍ້ລິເລີ່ມ ວ່າດ້ວຍການພັດທະນາ, ການອ່ຽງໄປທາງໃດໜຶ່ງ ແມ່ນສະທ້ອນໃຫ້ເຫັນເຖິງປະເພດຂອງໄພຂົ່ມຂູ່ ທີ່ຕ້ອງໄດ້ແກ້ໄຂ, ແຕ່ບໍ່ແມ່ນການໃຫ້ຄວາມສຳຄັນບຸກຄົນ ຫຼື ກຸ່ມຄົນ ໃດໜຶ່ງສະເພາະ. ການຮັບປະກັນການມີສ່ວນຮ່ວມໃນການອອກແບບແຜນປະຕິບັດງານຂອງພາກສ່ວນກ່ຽວຂ້ອງຢ່າງກ້ວາງຂວາງ - ທີ່ມີຄວາມ


© United Nations 2018 – All rights reserved

ຊ່ຽວຊານ ແລະ ທັດສະນະທີ່ແຕກຕ່າງກັນ - ຈະເປັນວິທີທາງທີ່ເປັນປະໂຫຍດ ເພື່ອຮັບປະກັນວ່າ ແຜນປະຕິບັດງານ ປະກອບມີບັນດາຂໍ້ລິເລີ່ມໃນຂົງເຂດທີ່ກ້ວາງຂວາງ ທີ່ມີຄວາມສົມດຸນ ແລະ ເໝາະສົມ.

## 6.4 ໄລຍະເວລາ

### 6.4.1 ຂອບເວລາ

ມັນບໍ່ມີຂອບໄລຍະເວລາທີ່ສົມບູນແບບ ໃນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ຜ່ານມາ, ແຜນປະຕິບັດງານແຫ່ງຊາດ ແມ່ນໃຊ້ເວລາ ລະຫວ່າງ 1 ຫາ 5 ປີ. ໄລຍະເວລາ 1 ປີ ແມ່ນຖືວ່າ ເປັນຂອບເວລາທີ່ສັ້ນທີ່ສຸດ ໃນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

ແຜນປະຕິບັດງານແຫ່ງຊາດ ຄວນກຳນົດຂອບໄລຍະເວລາ ທີ່ເປັນໄປໄດ້ ໃນການຈັດຕັ້ງປະຕິບັດ, ຕົວຢ່າງ: ຂອບໄລຍະເວລາ ທີ່ສາມາດບັດລຸທຸກຈຸດປະສົງຂອງແຜນປະຕິບັດງານແຫ່ງຊາດ. ຂອບໄລຍະເວລາ ຕ້ອງຄຳນຶ່ງເຖິງປັດໄຈຕ່າງໆ ເຊັ່ນ:

ກ) ງົບປະມານ ທີ່ມີ;

ຂ) ການຜັນປ່ຽນທາງດ້ານສະພາບແວດລ້ອມທາງການເມືອງ; ແລະ

ຄ) ຜົນກະທົບຈາກສະພາບພາຍນອກທີ່ເປັນໄປໄດ້ຕໍ່ບັນດາກິດຈະກຳທີ່ໄດ້ວາງແຜນໄວ້.

ເຖິງແມ່ນວ່າຈະມີຄວາມສຳຄັນໃນການກຳນົດຂອບໄລຍະເວລາ ເພື່ອຈັດຕັ້ງປະຕິບັດແຜນປະຕິບັດງານ ກໍຕາມ, ຜູ້ທີ່ຮັບຜິດຊອບ ກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານ ຄວນມີຄວາມຍືນຍຸ່ນ ແລະ ປັບປຸງຂອບໄລຍະເວລາ ໃນການຈັດຕັ້ງປະຕິບັດ ຕາມຄວາມຈຳເປັນ ແລະ ຢ່າງເໝາະສົມ ໂດຍຜ່ານຂະບວນການຕິດຕາມ ແລະ ປະເມີນທີ່ມີປະສິດຕິພາບ (ກວດເບິ່ງ ຂໍ້ທີ 11).

### 6.4.2 ການປະເມີນ

ແຜນປະຕິບັດງານແຫ່ງຊາດ ອາດຖືເປັນຂໍ້ລິເລີ່ມແບບລວດດຽວ, ຫຼື ເປັນ 1 ໃນບັນດາຂັ້ນຕອນ ເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

ພາຍຫຼັງການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ເຊັ່ນ: ໄລຍະສຸດທ້າຍຂອງການຈັດຕັ້ງປະຕິບັດ, ຄວນມີການປະເມີນ ເພື່ອ

ກ) ກຳນົດຂອບເຂດທີ່ສາມາດບັນລຸຈຸດປະສົງ ແລະ ເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ; ແລະ

ຂ) ພິຈາລະນາຂັ້ນຕອນຕໍ່ໄປ ຖ້າມີຄວາມຈຳເປັນ (ກວດເບິ່ງ ຂໍ້ທີ 11).

## 6.5 ກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ

ເພື່ອຈຸດປະສົງຂອງເອກະສານສະບັບນີ້,

ກ) 'ກຸ່ມເປົ້າໝາຍ' ແມ່ນໝາຍເຖິງພາກສ່ວນ (ບຸກຄົນ, ກຸ່ມຄົນ ຫຼື ສະຖາບັນ) ທີ່ມີການປະພຶດ ຫຼື ທັດສະນະ ທີ່ໄດ້ຖືກກຳນົດເປັນປັດໄຈທີ່ຕ້ອງໄດ້ຮັບການປັບປ່ຽນ ເພື່ອບັນລຸເປົ້າໝາຍ ແລະ ຈຸດປະສົງຂອງແຜນປະຕິບັດງານແຫ່ງຊາດ; ແລະ

**ໝາຍເຫດ:** ພຶດຕິກຳ ທີ່ຕິດພັນກັບສະຖາບັນ (ຕົວຢ່າງ: ກົມ ຫຼື ຂະແໜງການພາກລັດຖະບານ) ແມ່ນສາມາດສະແດງອອກຈາກການປະຕິບັດ ແລະ ການເຮັດວຽກຂອງສະຖາບັນນັ້ນ, ແລະ ທັດສະນະ ແມ່ນສາມາດສະແດງອອກຈາກບັນດານະໂຍບາຍທາງການ. ການປ່ຽນແປງຂອງພຶດຕິກຳຂອງຂະແໜງການພາກລັດ ແມ່ນສາມາດສະແດງອອກຈາກການປ່ຽນແປງຂັ້ນຕອນການດຳງານ; ການປ່ຽນແປງຂອງທັດສະນະ ແມ່ນສາມາດສະແດງອອກຈາກການປ່ຽນແປງດ້ານນະໂຍບາຍ, ກົດລະບຽບ ຫຼື ກົດໝາຍ.

ຂ) 'ຜູ້ທີ່ໄດ້ຮັບຜົນປະໂຫຍດ' ແມ່ນໝາຍເຖິງພາກສ່ວນ (ບຸກຄົນ, ກຸ່ມຄົນ ຫຼື ສະຖາບັນ) ທີ່ຄາດວ່າຈະຮັບຜົນປະໂຫຍດຈາກຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

© United Nations 2018 – All rights reserved

ກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຜົນປະໂຫຍດສະເພາະຂອງແຜນປະຕິບັດງານແຫ່ງຊາດ ຄວນຖືກກຳນົດໃນໄລຍະການອອກແບບແຜນດັ່ງກ່າວ. ການຄັດເລືອກກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ ຕ້ອງອີງໃສ່ການປະເມີນແບບຮອບດ້ານ ກ່ຽວກັບບັນອາວຸດຂະໜາດນ້ອຍ ແລະ ເບົາ (ກວດເບິ່ງ ຂໍ້ທີ 4.3.a).

ກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ ສາມາດປະກອບມີບຸກຄົນ, ກຸ່ມບຸກຄົນ, ອົງການຈັດຕັ້ງ ແລະ ສະຖາບັນ ແລະ ອາດປະກອບມີພາກສ່ວນຂອງພາກລັດ ແລະ ພາກສ່ວນທີ່ບໍ່ຂຶ້ນກັບລັດ, ກໍຄື ພາກສ່ວນເອກະຊົນ-ລັດ.

ແຜນປະຕິບັດງານແຫ່ງຊາດ ອາດລະບຸບຸກຄົນ, ກຸ່ມບຸກຄົນ, ອົງການຈັດຕັ້ງ ແລະ ສະຖາບັນ ເປັນທັງກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ.

ແຜນປະຕິບັດງານແຫ່ງຊາດ ຄວນຄຳນຶ່ງເຖິງຄວາມຕ້ອງການສະເພາະຂອງກຸ່ມຄົນ - ລວມທັງຍິງ-ຊາຍ, ເດັກນ້ອຍ, ໄວ້ໜຸ່ມ ແລະ ຊາວໜຸ່ມ - ແລະ ຄວນຮັບຮູ້ ແລະ ລົງມືຈັດຕັ້ງປະຕິບັດຕາມການພິຈາລະນາຕ່າງໆ ກ່ຽວກັບບັນຫາທີ່ຕິດພັນກັບເພດ. ບົນຈິດໃຈດັ່ງກ່າວ, ການອອກແບບແຜນປະຕິບັດງານແຫ່ງຊາດ, ເວົ້າສະເພາະ ແມ່ນການຄັດເລືອກກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ ຄວນອີງໃສ່ຂໍ້ແນະນຳຂອງ ໂມສາອິກ (MOSAIC) 06.10, *ແມ່ຍິງ, ເພດ ແລະ ອາວຸດຂະໜາດນ້ອຍ ແລະ ເບົາ,* ແລະ ໂມສາອິກ (MOSAIC) 06.20,*ເດັກນ້ອຍ, ໄວ້ໜຸ່ມ, ຊາວໜຸ່ມ ແລະ ອາວຸດຂະໜາດນ້ອຍ ແລະ ເບົາ.*

ຕົວຢ່າງ: ມີຫຼາກຫຼາຍປັດໄຈທີ່ສາມາດຊີ້ແນະວິທີທາງໃນການກຳນົດກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຜົນປະໂຫຍດຈາກແຜນປະຕິບັດງານແຫ່ງຊາດ. ກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ ທີ່ໄດ້ຖືກກຳນົດໃນແຜນປະຕິບັດງານແຫ່ງຊາດ ບົນພື້ນຖານປັດໄຈຕ່າງໆ ເຊັ່ນ: ເຂດພູມສາດ, ເພດ, ອາຍຸ, ສາສະໜາ, ຊົນເຜົ່າ ແລະ ອື່ນໆ. ການປະພຶດຂອງບຸກຄົນ ຫຼື ກຸ່ມຄົນ ອາດສາມາດເປັນພື້ນຖານໃນການກຳນົດກຸ່ມເປົ້າໝາຍ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດ, ຕົວຢ່າງ: ຜູ້ກໍ່ອາຊະຍາກຳ ຫຼື ກຸ່ມກໍ່ອາຊະຍາກຳ ສາມາດຖືກກຳນົດເປັນພາກສ່ວນ ທີ່ມີທັດສະນະ ແລະ ພຶດຕິກຳ ທີ່ແຜນປະຕິບັດງານແຫ່ງຊາດ ມີຈຸດປະສົງຢາກມີອິທິພົນຕໍ່ການແປ່ງປ່ຽນ.

# 7 ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພາກສ່ວນຫຼັກ

## 7.1 ພາກທົ່ວໄປ

ແຜນປະຕິບັດງານແຫ່ງຊາດ ໂດຍອີງໃສຄຸນລັກນະສະເພາະຂອງມັນ ຄວນມີການປະກອບສ່ວນຂອງພາກສ່ວນຕ່າງໆ ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານດັ່ງກ່າວ. ຂໍ້ນີ້ ແມ່ນໃຫ້ຄຳແນະນຳ ກ່ຽວກັບບົດບາດ ແລະ ໜ້າທີ່ຮັບຜິດຊອບສະເພາະຂອງບຸກຄົນ, ກຸ່ມຄົນ ແລະ ສະຖາບັນ ທີ່ສາມາດຫຼິ້ນບົດບາດອັນສຳຄັນໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານ.

ໝາຍເຫດ 1: ໃນສະພາບການພິເສດ, ເປົ້າໝາຍ ແລະ ຈຸດປະສົງຂອງແຜນປະຕິບັດງານແຫ່ງຊາດ ຄວນກຳນົດພາກສ່ວນຕ່າງໆ ທີ່ມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານ. ຂໍ້ນີ້ ຄວນຖືເປັນການຊີ້ນຳ ແລະ ບໍ່ແມ່ນການແນະນຳຢ່າງຄົບຖ້ວນ.

ໝາຍເຫດ 2: ໃນເອກະສານສະບັບນີ້, ແມ່ນມີຈໄຈແຍກ ລະຫວ່າງພາກສ່ວນ ທີ່ໄດ້ຖືກກຳນົດເປັນເປົ້າໝາຍ ແລະ/ຫຼື ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດຈາກແຜນປະຕິບັດງານແຫ່ງຊາດ, ແລະ ອີກພາກສ່ວນ ທີ່ມີບົດບາດທາງການໃນການອອກແບບ ແລະ/ຫຼື ການຈັດຕັ້ງປະຕິບັດແຜນປະຕິບັດງານ. ຢ່າງໃດກໍຕາມ, ບາງພາກສ່ວນກໍຕົກຢູ່ໃນສອງປະເພດ.

## 7.2 ກົນໄກການປະສານງານແຫ່ງຊາດ

ກົນໄກການປະສານງານແຫ່ງຊາດ - ປະຕິບັດງານ ໂດຍສອດຄ່ອງກັບໂມສາອິກ (MOSAIC) 03.40 - *ກົນໄກການປະສານງານແຫ່ງຊາດ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ* - ຄວນຮັບຜິດຊອບຕໍ່ການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດໂດຍລວມ.

ກົນໄກປະສານງານຍ່ອຍ (ຕົວຢ່າງ: ກົນໄກລະດັບແຂວງ ຫຼື ເມືອງ) ອາດຖືກສ້າງຕັ້ງຂຶ້ນເພື່ອສະໜັບສະໜູນກົນໄກການປະສານງານແຫ່ງຊາດ.

ບົດບາດຂອງກົນໄກການປະສານງານແຫ່ງຊາດ ກ່ຽວກັບແຜນປະຕິບັດງານແຫ່ງຊາດ ຄວນ

a) ປະສານງານ ແລະ ໃຫ້ການຊີ້ນຳທາງດ້ານຍຸດທະສາດໃນການອອກແບບແຜນປະຕິບັດງານແຫ່ງຊາດ;


© United Nations 2018 – All rights reserved

b) ເຜີຍແຜ່ ແລະ ສົ່ງເສີມແຜນປະຕິບັດງານແຫ່ງຊາດ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ, ລວມທັງລັດຖະບານ, ອົງການສາກົນ ແລະ ພາກພື້ນ, ອົງການຈັດຕັ້ງພົນລະເຮືອນ ແລະ ປະຊາຊົນທົ່ວໄປ;

c) ປະສານງານການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ລວມທັງການຕິດຕາມກວດກາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນປະຕິບັດງານ;

d) ຮັບປະກັນການສື່ສານ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ໃນແຜນປະຕິບັດງານແຫ່ງຊາດ ຢ່າງມີປະສິດທິພາບ;

e) ປະສານງານການຕິດຕາມ, ການປະເມີນຊື່ວຄາວ, ແລະ ຖ້າມີຄວາມຈຳເປັນ, ປັບປຸງແຜນປະຕິບັດງານແຫ່ງຊາດ ເພື່ອຕອບສະໜອງຕໍ່ກັບການປ່ຽນແປງຂອງສະພາບການດຳເນີນງານ; ແລະ

f) ນຳພາການປະເມີນຂັ້ນສຸດທ້າຍຂອງແຜນປະຕິບັດງານແຫ່ງຊາດ ພາຍຫຼັງສຳເລັດການຈັດຕັ້ງປະຕິບັດ ແລະ ກຳນົດຂັ້ນຕອນຕໍ່ໄປ.

ບ່ອນໃດທີ່ຍັງບໍ່ໄດ້ສ້າງກົນໄກການປະສານງານແຫ່ງຊາດ, ການສ້າງກົນໄກດັ່ງກ່າວ ຈະເປັນບາດກ້າວທຳອິດໃນຂະບວນການສ້າງແຜນປະຕິບັດງານແຫ່ງຊາດ. ການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການປະສານງານແຫ່ງຊາດ ອາດແມ່ນຈຸດປະສົງສະເພາະຂອງແຜນປະຕິບັດງານ.

## 7.3 ຂະແໜງການລັດຖະບານ

### 7.3.1 ໜ່ວຍງານທີ່ມີໄດ້ຮັບໜ້າທີ່

ໜ່ວຍງານຮັບຜິດຊອບທີ່ເໝາະສົມ ຄວນຮັບຜິດຊອບໃນການມອບໝາຍໜ້າທີ່ໃນການສ້າງແຜນປະຕິບັດງານແຫ່ງຊາດ ແລະ ອະນຸມັດການຈັດຕັ້ງປະຕິບັດ ພາຍຫຼັງສຳເລັດການອອກແບບ.

ຖ້າມີໜ່ວຍງານແຫ່ງຊາດ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ (ກວດເບິ່ງຂໍ້ທີ 5 ຂອງໂມຊາອິກ (MOSAIC) 03.40, *ກົນໄກການປະສານງານ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ*), ໜ່ວຍງານດັ່ງກ່າວ ອາດມອບໝາຍໜ້າທີ່ດັ່ງກ່າວ.

ໜ່ວຍງານທີ່ມີອຳນາດ ແມ່ນຈະແຕກຕ່າງກັນ ລະຫວ່າງແຕ່ລະປະເທດ, ແລະ ອາດປະກອບມີປະມຸກລັດ ຫຼື ຫົວໜ້າລັດຖະບານ, ລັດຖະມົນຕີ ຫຼື ຫົວໜ້າຂະແໜງການຂອງລັດຖະບານ (ຕົວຢ່າງ: ຜູ້ກວດສອບຂອງພາກສ່ວນຕຳຫລວດ - Inspector General of Police)

ລັດຖະມົນຕີ ຄວນຮັບຜິດຊອບໃນການສະໜັບສະໜູນ ແລະ ສົ່ງເສີມແຜນປະຕິບັດງານຕໍ່ສາທາລະນະ ແລະ ທົ່ວຂະແໜງການຂອງລັດຖະບານ, ແລະ ເຮັດວຽກຢ່າງໃກ້ຊິດກັບກົນໄກການປະສານງານແຫ່ງຊາດ.

### 7.3.2 ເຈົ້າໜ້າທີ່ພາກລັດ (ລະດັບຊາດ)

ເຈົ້າໜ້າທີ່ຈາກບັນດາກະຊວງ / ກົມ ທີ່ເຂົ້າຮ່ວມກົນໄກການປະສານງານແຫ່ງຊາດ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຄວນຫຼິ້ນບົດບາດໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

ເຈົ້າໜ້າທີ່ດັ່ງກ່າວ ຄວນເຜີຍແຜ່ຂໍ້ມູນ ກ່ຽວກັບແຜນປະຕິບັດງານແຫ່ງຊາດ ໃຫ້ແກ່ເພື່ອນຮ່ວມງານພາຍໃນບັນດາກະຊວງ ແລະ ກົມ ເພື່ອຮັບປະກັນຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບ, ແລະ ການຍອມຮັບຕໍ່ແຜນປະຕິບັດງານ.

### 7.3.3 ເຈົ້າໜ້າທີ່ຈາກພາກສ່ວນຄວາມໝັ້ນຄົງ

ເຈົ້າໜ້າທີ່ອາວຸໂສຈາກຂະແໜງການຄວາມໝັ້ນຄົງ ຄວນຫຼິ້ນບົດບາດໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາອົງປະກອບທີ່ກ່ຽວຂ້ອງຂອງແຜນປະຕິບັດງານ.

ການກຳນົດວ່າ ຄວນເອົາຂະແໜງການຄວາມໝັ້ນຄົງໃດ ເຂົ້າມາມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຄວນອີງໃສ່ປັດໄຈຕ່າງໆ ເຊັ່ນ: ຂໍ້ສະເໜີຂອງການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ແລະ ໂຄງສ້າງ ແລະ ອົງການຈັດຕັ້ງສະເພາະຂອງບັນດາຂະແໜງການ ແລະ ສະຖາບັນຄວາມໝັ້ນຄົງແຫ່ງຊາດ. ບັນດາຂະແໜງການຄວາມໝັ້ນຄົງຕໍ່ໄປນີ້ ອາດມີສ່ວນຮ່ວມໃນການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ:

© United Nations 2018 – All rights reserved 

a) ຕຳຫຼວດ

b) ທະຫານ

c) ພາສີ

d) ຂະແໜງການບຳບັດ

e) ເຈົ້າໜ້າທີ່ກວດຄົນເຂົ້າເມືອງ

f) ຄຸ້ມຄອງຊາຍແດນ

g) ສືບສວນ

h) ເຈົ້າໜ້າທີ່ການບິນ

i) ສັດປ່າ

### 7.3.4 ເຈົ້າໜ້າທີ່ອາວຸໂສພາກລັດ (ຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ)

ເຈົ້າໜ້າທີ່ອາວຸໂສຈາກຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ ຄວນປະກອບສ່ວນເຂົ້າໃນການກຳນົດບັນຫາຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ ທີ່ຈຳເປັນຕ້ອງໄດ້ຮັບການແກ້ໄຂ ໂດຍແຜນປະຕິບັດງານແຫ່ງຊາດ. ໃນບົດບາດດັ່ງກ່າວ, ເຈົ້າໜ້າທີ່ເຫຼົ່ານີ້ ອາດເຮັດໜ້າເປັນປະບອກສຽງຂອງເຂດທ້ອງຖິ່ນຂອງຕົນ.

ເຈົ້າໜ້າທີ່ອາວຸໂສພາກລັດໃນລະດັບຕ່າງໆ ອາດຮັບຜິດຊອບໃນການປະສານການຈັດຕັ້ງປະຕິບັດບາງອົງປະກອບສະເພາະຂອງແຜນປະຕິບັດງານແຫ່ງຊາດ. ເຈົ້າໜ້າທີ່ດັ່ງກ່າວ ອາດຫຼິ້ນບົດບາດໃນການສົ່ງເສີມການຮັບຮູ້ ແລະ ການຍອມຮັບຂອງປະຊາຊົນທ້ອງຖິ່ນ ກ່ຽວກັບແຜນປະຕິບັດງານ.

## 7.4 ສະມະຊິກສະພາ

ບັນດາຜູ້ຕາງໜ້າທີ່ໄດ້ຮັບການເລືອກຕັ້ງ (ສະມາຊິກສະພາ ແລະ ອົງການນິຕິບັນຍັດ) ຄວນມີສ່ວນຮ່ວມໃນການສ້າງແຜນປະຕິບັດງານແຫ່ງຊາດ ເພື່ອຮັບປະກັນວ່າ ແຜນປະຕິບັດງານດັ່ງກ່າວ ສາມາດແກ້ໄຂຄວາມຕ້ອງການຂອງປະຊາຊົນໄດ້ຢ່າງຄົບຖ້ວນ.

ສະມາຊິກສະພາ ອາດມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນປະຕິບັດງານ, ໂດຍສະເພາະ ຂົງເຂດທີ່ຕິດພັນກັບການປັບປຸງນິຕິກຳ ແລະ ການຊຸກຍູ້ໃຫ້ລັດຖະບານ ມີຄວາມຮັບຜິດຊອບຕໍ່ບັນດາຂໍ້ຕ່າງໆ ໃນແຜນປະຕິບັດງານແຫ່ງຊາດ. ສະນັ້ນ, ບັນດາກຳມາທິການຂອງສະພາ (ຖ້າມີ) ສາມາດຫຼິ້ນບົດບາດອັນສຳຄັນໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

## 7.5 ພົນລະເມືອງ

ພົນລະເມືອງ ຄວນມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ໃນກໍລະນີມີບົດບາດທາງການ ແມ່ນຄວນເປັນສ່ວນໜຶ່ງຂອງ ກຸ່ມທີ່ມີການຈັດຕັ້ງ ໃນຮູບແບບໃດໜຶ່ງ. ກຸ່ມນີ້ ອາດລວມມີອົງການຈັດຕັ້ງພົນລະເຮືອນ (ຕົວຢ່າງ: ກຸ່ມແມ່ຍິງ, ກຸ່ມຊາວໜຸ່ມ, ອົງການພັດທະນາຊຸມຊົນ, ອົງການສາສະໜາ, ອື່ນໆ) ແລະ ສະມາຄົມທຸລະກິດ.

ການມີສ່ວນຮ່ວມຂອງພົນລະເຮືອນ ໃນຖານະພາກສ່ວນໜຶ່ງ ໂດຍມີບົດບາດທາງການ ໃນການອອກແບບ ແລະ/ຫຼື ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຄວນຖືວ່າ ເປັນບົດບາດໜຶ່ງ ທີ່ແຕກຕ່າງຈາກບົດບາດຂອງພົນລະເຮືອນ ໃນຖານະທີ່ເປັນແຫຼ່ງ, ແລະ ເປັນຜູ້ທີ່ໄດ້ຮັບຜົນປະໂຫຍດຈາກນະໂຍບາຍຂອງລັດຖະບານ ແລະ ພາກປະຕິບັດສະເໜີ ໂດຍແຜນປະຕິບັດງານແຫ່ງຊາດ.

 © United Nations 2018 – All rights reserved

ໝາຍເຫດ: ອົງການຈັດຕັ້ງພົນລະເຮືອນ ໃນຫຼາຍປະເທດ ແມ່ນກວມເອົາຫຼາຍພາກສ່ວນຈາກຫຼາຍຂົງເຂດ. ຂີດຄວາມສາມາດ, ລະດັບຂອງກິດຈະກໍາ, ຄວາມຊ່ຽວຊານ ແລະ ບົດບາດຂອງພາກສ່ວນຈາກອົງການຈັດຕັ້ງພົນລະເຮືອນ ທີ່ອະນຸດມັດໃຫ້, ໂດຍຕິດພັນກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແມ່ນແຕກຕ່າງກັນສໍາລັບແຕ່ລະປະເທດ.

## 7.6 ອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອະນຸພາກພື້ນ

ບັນດາອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອະນຸພາກພື້ນ ອາດມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຖ້າມີການສະເໜີ ໂດຍລັດຖະບານ ແລະ ບໍ່ເປັນການແຕະຕ້ອງອະທິປະໄຕ.

ອົງການຈັດຕັ້ງສາກົນ, ພາກພື້ນ ແລະ ອະນຸພາກພື້ນ ສາມາດຫຼິ້ນຫຼາຍບົດບາດ, ລວມທັງບົດບາດໃນການເປັນຄູ່ຮ່ວມຈັດຕັ້ງປະຕິບັດ (ຈັດຕັ້ງປະຕິບັດບັນດາກິດຈະກໍາ ແລະ ຊ່ວຍເຫຼືອດ້ານເຕັກນິກ), ເປັນຜູ້ອຸປະທໍາ, ເປັນຜູ້ສະໜັບສະໜູນດ້ານການເມືອງ, ອື່ນໆ. ບໍ່ວ່າຈະຫຼິ້ນບົດບາດໃດກໍຕາມ ໂດຍອົງການຈັດຕັ້ງໃດກໍຕາມ, ລັດຖະບານ ຕ້ອງຮັກສາບົດບາດນໍາພາໃນການຕັດສິນ.

ປະເພດອົງການຈັດຕັ້ງ ທີ່ສາມາດມີສ່ວນຮ່ວມ

a) ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ);

b) ອົງການຈັດຕັ້ງພາກພື້ນ ແລະ ອະນຸພາກພື້ນລະຫວ່າງລັດຖະບານ ທີ່ກ່ຽວຂ້ອງກັບການປົກປັກຮັກສາສັນຕິພາບ ແລະ ຄວາມໝັ້ນຄົງພາກພື້ນ ແລະ ສາກົນ; ແລະ

c) ສະຖາບັນການເງິນສາກົນ ແລະ ພາກພື້ນ

ໝາຍເຫດ 1: ໃນຫຼາຍປະເທດ, ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ໄດ້ມີສ່ວນຮ່ວມໂດຍກົງໃນການສະໜັບສະໜູນການອອກແບບ ແລະ ການຈັດຕັ້ງພະຕິບັດແຜນປະຕິບັດງານແຫ່ງຊາດ. ບັນດາອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ຈໍານວນໜຶ່ງ ໄດ້ມີສ່ວນຮ່ວມໃນຂົງເຂດວຽກງານດັ່ງກ່າວ, ຊຶ່ງໃນນີ້ ແມ່ນອົງການພັດທະນາ ສປຊ (UNDP) ແລະ ຫ້ອງການ ສປຊ ເພື່ອປົດອາວຸດ (UNODA).

ໝາຍເຫດ 2: ໃນຫຼາຍພາກພື້ນ ແລະ ອະນຸພາກພື້ນ, ສປຊ ໄດ້ສ້າງຕັ້ງອົງກອນ ທີ່ໃຫ້ການສະໜັບສະໜູນຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍສະເພາະ. ບັນດາອົງກອນ ແມ່ນມີຢູ່

- ເອີຣົບຕາເວັນອອກສ່ຽງໃຕ້ ແລະ ເອຣົບຕາເວັນອອກ - the South Eastern and Eastern Europe Clearing House for the Control of Small Arms and Light Weapons Control (SEESAC)
- ລາຕິນອາເມລິກາ ແລະ ຄາລິບຽນ - ສູນພາກພື້ນ ສປຊ ເພື່ອສັນຕິພາບ, ການປົດອາວຸດ ແລະ ການພັດທະນາລາຕິນອາເມລິກາ ແລະ ຄາລິບຽນ (the United Nations Regional Centre for Peace, Disarmament and Development in Latin America and the Caribbean (UNLIREC));
- ອາຟຣິກາ - ສູນພາກພື້ນ ສປຊ ເພື່ອສັນຕິພາບ ແລະ ການປົດອາວຸດຢູ່ອາຟຣິກາ (the United Nations Regional Centre for Peace and Disarmament in Africa (UNREC));
- ອາຊີ-ປາຊີຟິກ - ສູນພາກພື້ນ ສປຊ ເພື່ອສັນຕິພາບ ແລະ ການຫຼຸດຜ່ອນອາວຸດຢູ່ອາຊີ ແລະ ປາຊີຟິກ (the United Nations Regional Centre for Peace and Disarmament in Asia and the Pacific - UNRCPD).

## 7.7 ຜູ້ຊ່ຽວຊານທາງດ້ານເຕັກນິກ

ບາງປະເທດອາດມີຂີດຄວາມສາມາດທາງດ້ານເຕັກນິກ ແລະ ຄວາມຊ່ຽວຊານໃນລະດັບທີ່ຕໍ່າໃນຂົງເຂດວຽກງານ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ. ຂໍ້ຈໍາກັດດັ່ງກ່າວ ອາດສາມາດແກ້ໄຂ ໂດຍການຮ່ວມມືກັບບຸກຄົນ ຫຼື ອົງການຈັດຕັ້ງສະເພາະດ້ານ ທີ່ມີຄວາມຊ່ຽວຊານ ໃນການອອກແບບແຜນປະຕິບັດງານແຫ່ງຊາດ ແລະ ໃນການສະໜັບສະໜູນການຈັດຕັ້ງປະຕິບັດ. ຜູ້ຊ່ຽວຊາດດັ່ງກ່າວ ອາດມີບົດບາດໃນຖານະຜູ້ໃຫ້ຄໍາປຶກສາ, ຜູ້ອໍານວຍ, ຜູ້ຈັດຕັ້ງປະຕິບັດ ແລະ/ຫຼື ຜູ້ຝຶກອົບຮົມ ໃນລະດັບຕ່າງໆຂອງການສ້າງ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

ຕົວຢ່າງ: ມີຫຼາຍອົງການຈັດຕັ້ງ ແລະ ສະຖາບັນຕ່າງໆ ທີ່ມີຄວາມຊ່ຽວຊານທີ່ຈໍາເປັນໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ໂດຍສະເພາະ ແມ່ນມີຄວາມຊ່ຽວຊານໃນຂົງເຂດດັ່ງກ່າວນີ້. ບາງ

© United Nations 2018 – All rights reserved 

ອົງການເຄືອຂ່າຍອົງການສະຫະປະຊາຊາດ (ສປຊ) ມີເຈົ້າໜ້າທີ່ ທີ່ມີຄວາມຊ່ຽວຊານດ້ານເຕັກສະເພາະ ເປັນຕົ້ນແມ່ນ ໃນຂົງເຂດການເກັບຄືນ ແລະ ທຳລາຍອາວຸດ, ແລະ ຄວາມຊ່ຽວຊານໃນການອອກແບບໂຄງການ ທີ່ນຳໃຊ້ເຂົ້າໃນການສະໜັບສະໜູນແຜນປະຕິບັດງານແຫ່ງຊາດ. ນອກນັ້ນ, ຍັງມີອົງການທີ່ປຶກສາເອກະຊົນຈຳນວນໜຶ່ງ ທີ່ໄດ້ປະກອບສ່ວນເຂົ້າໃນບາງພາກສ່ວນຂອງການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ເຈົ້າໜ້າທີ່ຈາກອົງການຜູ້ອຸປະຖຳສາກົນ ກໍມີຄວາມຊ່ຽວຊານໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຜ່ານບົດບາດໃນນາມຜູ້ສະໜັບສະໜູນດ້ານງົບປະມານຕໍ່ໂຄງການການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

# 8 ການກະກຽມ ແລະ ພື້ນຖານ

## 8.1 ການວາງແຜນຍຸດທະສາດ

ການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຄວນມີການວາງແຜນຢ່າງລະອຽດ. ການວາງແຜນຍຸດທະສາດ ຄວນຖືກນຳພາໂດຍກົນໄກການປະສານງານ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຖືກແຕ່ງຕັ້ງ (ກວດເບິ່ງຂໍ້ທີ 7.2) ແລະ ຄວນດຳເນີນຢ່າງເປີດກ້ວາງ ແລະ ໂປ່ງໃສ. ການວາງແຜນຍຸດທະສາດ ຄວນ:

a) ຮ່າງເປົ້າໝາຍ ແລະ ຈຸດປະສົງລວມຂອງແຜນປະຕິບັດງານ;

b) ກຳນົດຂອບເຂດ ແລະ ລັກສະນະຂອງການເກັບກຳຂໍ້ມູນ ທີ່ຈະຖືກດຳເນີນ ເພື່ອແນະນຳການສ້າງແຜນປະຕິບັດງານແຫ່ງຊາດ, ຕົວຢ່າງ: ການເກັບກຳຂໍ້ມູນຜ່ານການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ;

c) ກຳນົດພາກສ່ວນທາງການເມືອງ, ການດຳເນີນງານ ແລະ ການເງິນ ທີ່ຈະມີສ່ວນຮ່ວມ, ແລະ ຈະພົວພັນ ແລະ ຂົນຂວາຍພາກສ່ວນດັ່ງກ່າວແນວໃດ;

d) ຕົກລົງການຈັດລຽນລຳດັບບັນດາກິດຈະກຳ (ໄລຍະເວລາ), ລວມທັງກຳນົດບັນດາກິດຈະກຳ ທີ່ຕ້ອງໄດ້ຈັດຂຶ້ນ ແລະ ຂີດໝາຍສຳຄັນທີ່ຕ້ອງໄດ້ຂ້າມຜ່ານ ເພື່ອບັນລຸເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ.

## 8.2 ການນຳພາ

### 8.2.1 ພາກທົ່ວໄປ

ໃນຫຼາຍກໍລະນີ, ແຜນປະຕິບັດງານແຫ່ງຊາດ ອາດກວມເອົາຫຼາຍພາກສ່ວນຈາກຂົງເຂດ ແລະ ໃນລະດັບຕ່າງໆ ແລະ ໃນແຕ່ລະໄລຍະຂອງການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານ. ໂດຍບໍ່ຄຳນຶງເຖິງຂອບເຂດ ແລະ ຂະໜາດຂອງແຜນປະຕິບັດງານ, ການນຳພາທາງການເມືອງ ແລະ ການດຳເນີນງານ ທີ່ມີປະສິດທິພາບ ແມ່ນສຳຄັນຕໍ່ຜົນສຳເລັດຂອງແຜນປະຕິບັດງານແຫ່ງຊາດ.

### 8.2.2 ການນຳພາທາງການເມືອງ

ຜູ້ທີ່ຮັບຜິດຊອບໃນການນຳພາການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຄວນກຳນົດເວລາໃດ, ແນວໃດ ແລະ ໃນຂົງເຂດໃດ ທີ່ມີຄວາມຈຳເປັນຕ້ອງຂົນຂວາຍການສະໜັບສະໜູນທາງການເມືອງ ເພື່ອອຳນວຍໃຫ້ແກ່ການຈັດຕັ້ງປະຕິບັດແຜນປະຕິບັດງານ ຢ່າງມີປະສິດທິພາບ. ຂະບວນການໃນການຂົນຂວາຍ ແລະ ຮັກສາການສະໜັບສະໜູນທາງການເມືອງ, ແລະ ສະຖານທີ່ທີ່ໄດ້ຮັບການສະໜັບສະໜູນ ອາດແຕກຕ່າງກັນສຳລັບແຕ່ລະປະເທດ.

ການສະໜັບສະໜູນທາງການເມືອງ ອາດມີຄວາມຈຳເປັນໃນແຕ່ລະໄລຍະໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ໄລຍະດັ່ງກ່າວ ອາດກວມເອົາ

a) ໃນໄລຍະການຄົ້ນຄິດ, ແມ່ນເພື່ອຮັບເອົາການມອບໝາຍໃນການລິເລີ່ມຂະບວນການຮ່າງແຜນປະຕິບັດງານ, ແລະ ຮັບປະກັນການຍອມຮັບ ແລະ ການມີສ່ວນຮ່ວມຂອງບັນດາພາກສ່ວນທີ່ກ່ຽວຂ້ອງ, ຕົວຢ່າງ: ຂະແໜງການພາກລັດ, ສະພາ, ອົງການຈັດຕັ້ງພົນລະເຮືອນ, ອື່ນໆ;

 © United Nations 2018 – All rights reserved

b) ໃນເວລາທີ່ສຳເລັດການຮ່າງແຜນປະຕິບັດງານແຫ່ງຊາດ ແລະ ຕ້ອງໄດ້ມີການຮັບຮອງຢ່າງເປັນທາງການ, ເພື່ອຮັບປະກັນວ່າ ປະຊາຊົນ , ຂະແໜງການກ່ຽວຂ້ອງພາກລັດ, ສະພາ, ອື່ນໆ ສະໜັບສະໜູນແຜນປະຕິບັດງານແຫ່ງຊາດ; ແລະ

c) ໃນໄລຍະການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ເວລາທີ່ປະເຊີນກັບອຸປະສັກ, ບັນດາກິດຈະກຳ ໄດ້ຮັບການປັບປຸງ, ຫຼື ເສຍທ່ວງທ່າທີ່ດີ, ເພື່ອຮັບປະກັນການພົວພັນຢ່າງຕໍ່ເນື່ອງຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

ການສະໜັບສະໜູນລະດັບສູງຈາກລັດຖະມົນຕີ ແລະ/ຫຼື ປະມຸກລັດ ຫຼື ຫົວໜ້າລັດຖະບານ ອາດມີຄວາມຈຳເປັນຕໍ່ແຜນປະຕິບັດງານແຫ່ງຊາດ, ຊຶ່ງພົວພັນກັບບັນຫາລະອຽດອ່ອນ ແລະ ສ່ວນໃຫຍ່ແມ່ນຕິດພັນກັບຄວາມໝັ້ນຄົງແຫ່ງຊາດ ແລະ ກົດໝາຍ ແລະ ຄວາມເປັນລະບຽບຮຽບຮ້ອຍ.

ອາດຈຳເປັນຕ້ອງມີການພົວພັນ ແລະ ການສະໜັບສະໜູນຢ່າງເປັນປົກກະຕິຈາກເຈົ້າໜ້າທີ່ອາວຸໂສ ພາຍໃນບັນດາກະຊວງ, ກົມ ແລະ ຂະແໜງການພາກລັດ ເພື່ອຂ້າມຜ່ານສິ່ງທ້າທາຍ ແລະ ຄວາມແຕກຕ່າງຂອງທັດສະນະ ທີ່ອາດເກີດຂຶ້ນ. ບາງກະຊວງ, ກົມ ແລະ ຂະແໜງການ ອາດມີຄວາມພ້ອມທີ່ຈະໃຫ້ການສະໜັບສະໜູນ ແລະ ຍອມຮັບແຜນປະຕິບັດງານ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຫຼາຍກວ່າກະຊວງ, ກົມ ແລະ ຂະແໜງການອື່ນ. ການນຳພາທາງການເມືອງຈາກບັນດາສະຖາບັນ ທີ່ມີຄວາມພ້ອມໃຫ້ການສະໜັບສະໜູນ ແມ່ນສຳຄັນໃນການຮັບປະກັນການພົວພັນຂອງທຸກພາກສ່ວນທີ່ກ່ຽວຂ້ອງ.

### 8.2.3 ການນຳພາດ້ານການດຳເນີນງານ

ຕ້ອງແຕ່ງຕັ້ງກຸ່ມ ຫຼື ບຸກຄົນ ເພື່ອນຳພາການອອກແບບ ແລະ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ໃນກໍລະນີມີກົນໄກການປະສານງານແຫ່ງຊາດ (ກວດເບິ່ງຂໍ້ທີ 7.2), ກົນໄກດັ່ງກ່າວ ຕ້ອງນຳພາຂະບວນການດັ່ງກ່າວ.

ກຸ່ມທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງໄດ້ຮັບການມອບໝາຍຢ່າງຈະແຈ້ງ ແລະ ການສະໜັບສະໜູນທາງການເມືອງຢ່າງພຽງພໍ. ກຸ່ມດັ່ງກ່າວ ຕ້ອງໄດ້ຮັບອຳນາດເຕັມ ໃນການພົວພັນ ແລະ ມີອິດທິພົນຕໍ່ພາກສ່ວນນຳພາທາງການເມືອງ ແລະ ພາກສ່ວນຕັດສິນດ້ານການດຳເນີນງານ ຈາກກົມ ແລະ ຂະແໜງການຕ່າງໆ ທີ່ມີສ່ວນກ່ຽວຂ້ອງໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

ສະນັ້ນ, ຂໍ້ມູນສ່ວນໂຕຂອງຜູ້ປະສານງານຮ່ວມ ຫຼື ປະທານຂອງກົນໄກການປະສານງານແຫ່ງຊາດ ແມ່ນສຳຄັນ. ສະຖານທີ່ - ບັນດາກະຊວງ , ກົມ ຫຼື ຂະແໜງການ - ການນຳພາດ້ານການດຳເນີນງານ ເປັນປັດໄຈສຳຄັນ ໃນການກຳນົດປະສິດທິພາບຂອງຂະແໜງການ ຫຼື ກຸ່ມ ນຳພາການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

## 8.3 ຂີດຄວາມສາມາດ

ໃນໄລຍະຕົ້ນຂອງຂະບວນການສ້າງແຜນປະຕິບັດງານແຫ່ງຊາດ ແມ່ນຕ້ອງໄດ້ຄຳນຶງເຖິງຄວາມຕ້ອງການດ້ານຊັບພະຍາກອນມະນຸດ ແລະ ຂີດຄວາມສາມາດ. ແນ່ນອນວ່າ, ໃນຂະບວນການສ້າງ ແລະ ຈັດຕັ້ງພະຕິບັດແຜນປະຕິບັດງານແຫ່ງຊາດ, ການໝູນໃຊ້ທ່າແຮງຂອງຂີດຄວາມສາມາດທີ່ມີຢູ່ ແລະ ການສ້າງຂີດຄວາມສາມາດໃຫມ່ ຕ້ອງເປັນອົງປະກອບຫຼັກ ໃນທຸກຂົງເຂດຂອງແຜນປະຕິບັດງານແຫ່ງຊາດ.

ການລິເລີ່ມຂະບວນການແຜນປະຕິບັດງານແຫ່ງຊາດ ຈຳເປັນຕ້ອງມີຂີດຄວາມສາມາດໃນລະດັບໜຶ່ງ; ຕົວຢ່າງ: ການທຸ້ມເທເວລາເຂົ້າໃນການເຮັດວຽກຂອງເຈົ້າໜ້າທີ່ ແລະ ລະດັບຄວາມຮູ້ ກ່ຽວກັບບັນຫາທີ່ປິ່ນອ້ອມວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. ການສະໜັບສະໜູນຈາກພາຍນອກ (ຕົວຢ່າງ: ສປຊ ຫຼື ອົງການຈັດຕັ້ງພົນລະເຮືອນ) ຈະເປັນຜົນປະໂຫຍດ ໃນໄລຍະຕົ້ນນີ້. ສະນັ້ນ, ການສ້າງຂີດຄວາມສາມາດ ແມ່ນເປັນປັດໄຈເບື້ອງຕົ້ນ, ຫຼື ເປັນອົງປະກອບໜຶ່ງ, ໃນໄລຍະຕົ້ນຂອງການສ້າງແຜນປະຕິບັດງານແຫ່ງຊາດ.

ຜົນການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ທີ່ໄດ້ຖືກດຳເນີນໂດຍສອດຄ່ອງກັບໂມຊາອິກ (MOSAIC) 05.10, ຕ້ອງເປັນພື້ນຖານໃຫ້ແກ່ຍຸດທະສາດໃນການສ້າງຂີດຄວາມສາມາດ, ຊຶ່ງຕ້ອງ

a) ນຳໃຊ້ທ່າແຮງຂີດຄວາມສາມາດຂອງປະເທດ ແລະ ທ້ອງຖິ່ນ ພາຍໃນຂະແໜງການຂອງລັດຖະບານ, ຂະແໜງການທີ່ບໍ່ຂຶ້ນກັບລັດຖະບານ ແລະ ພາກເອກະຊົນ ໃຫ້ເກີດຜົນປະໂຫຍດສູງສຸດ;

b) ກຳນົດຄວາມຕ້ອງການດ້ານການສ້າງຂີດຄວາມສາມາດ; ແລະ

c) ກຳນົດວິທີທາງ, ຊ່ອງທາງ ແລະ ໄລຍະ ໃນການຊອກຫາການສະໜັບສະໜູນເພື່ອສ້າງຂີດຄວາມສາມາດຈາກພາຍນອກ.

© United Nations 2018 – All rights reserved

ຍຸດທະສາດ ຕ້ອງຫຼຸດຜ່ອນການເພິ່ງພາອາໄສການສະໜັບສະໜູນຈາກພາຍນອກ ແລະ ນຳໃຊ້ຂີດຄວາມສາມາດຂອງປະເທດ ແລະ ທ້ອງຖິ່ນໃຫ້ເກີດຜົນປະໂຫຍດສູງສຸດ ເພື່ອສ້າງພື້ນຖານທີ່ຍືນຍົງໃຫ້ແກ່ຊັບພະຍາກອນມະນຸດ ແລະ ຂີດຄວາມສາມາດ ໃນການຈັດຕັ້ງປະຕິບັດບັນດາຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໃນໄລຍະຍາວ.

ການປະເມີນຂີດຄວາມສາມາດ ແລະ ການສະໜັບສະໜູນດ້ານການສ້າງຂີດຄວາມສາມາດ ຕ້ອງຖືກດຳເນີນຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ.

ໝາຍເຫດ: ມີຫຼາຍແຫຼ່ງໃຫ້ການສະໜັບສະໜູນດ້ານການສ້າງຂີດຄວາມສາມາດ, ລວມທັງອົງການສະຫະປະຊາຊາດ, ອົງການຈັດຕັ້ງແຫ່ງຊາດ ແລະ ສາກົນ ທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງພາກພື້ນ ແລະ ອະນຸພາກພື້ນ.

## 8.4 ງົບປະມານ

ຍຸດທະສາດດ້ານງົບປະມານ ຕ້ອງຮ່າງຂຶ້ນໃນໄລຍະຕົ້ນຂອງການສ້າງແຜນປະຕິບັດ. ຍຸດທະສາດດັ່ງກ່າວ ອາດມີຂໍ້ຈຳກັດດ້ານຂອບເຂດ ແຕ່ຕ້ອງໄດ້ຮັບການປະເມີນ ແລະ ປັບປຸງ ໃນໄລຍະການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ.

ງົບປະມານ ມີຄວາມຈຳເປັນໃນໄລຍະການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. ແຫຼ່ງງົບປະມານ ບໍ່ວ່າຈະຜ່ານງົບປະມານແຫ່ງຊາດ ຫຼື ການຊ່ວຍເຫຼືອເພື່ອການພັດທະນາສາກົນ ແມ່ນມີການກຳນົດໄວ້ກ່ອນຫຼ່ວງໜ້າ. ການວາງແຜນຫຼ່ວງໜ້າ ແມ່ນມີຄວາມສຳຄັນໃນການຂົນຂວາຍການສະໜັບສະໜູນດ້ານການເງິນຢ່າງພຽງພໍ.

ງົບປະມານຂອງແຜນປະຕິບັດງານແຫ່ງຊາດ ຕ້ອງສອດຄ່ອງກັບແຜນງົບປະມານແຫ່ງຊາດ ບໍ່ວ່າງົບປະມານດັ່ງກ່າວ ຈະໄດ້ມາຈາກງົບປະມານແຫ່ງຊາດ ຫຼື ຈາກແຫຼ່ງອື່ນກໍຕາມ. ການຮັບປະກັນຄວາມສອດຄ່ອງ ແມ່ນມີຄວາມສຳຄັນໃນການສົ່ງເສີມຄວາມໂປ່ງໃສ ແລະ ຄວາມຮັບຊອບຕໍ່ຂະບວນການຕັດສິນດ້ານງົບປະມານ.

ເນື້ອໃນ ແລະ ຜົນຂອງແຜນປະຕິບັດງານແຫ່ງຊາດ ຄວນສອດຄ່ອງກັບຄວາມຕ້ອງການຂອງພົນລະເຮືອນທີ່ໄດ້ຖືກກຳນົດໄວ້, ແລະ ບໍ່ຄວນຖືກປັບປ່ຽນ ເພື່ອໃຫ້ໄດ້ຕາມເງື່ອນໄຂກຳນົດໂດຍຜູ້ອຸປະທຳຈາກພາຍນອກ.

ໝາຍເຫດ: ເອກະສານຊ້ອນທ້າຍ B ປະກອບຕົວຢ່າງຕ່າງໆໃນການພິຈາລະນາ ທີ່ອາດເປັນການແນະນຳວິທີທາງໃນສ້າງຍຸດທະສາດດ້ານງົບປະມານ ສຳລັບແຜນປະຕິບັດງານແຫ່ງຊາດ.

# 9 ການອອກແບບ ແລະ ການສ້າງແຜນປະຕິບັດງານ

## 9.1 ການເກັບກຳຂໍ້ມູນ (ການສຳຫຼວດ)

ແຜນປະຕິບັດງານແຫ່ງຊາດ ຄວນອີງໃສ່ຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ໃນລະດັບດີ ກ່ຽວກັບຄຸນລັກສະນະ ແລະ ຜົນກະທົບຂອງການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍໃນປະເທດທີ່ກ່ຽວຂ້ອງ.

ສະນັ້ນ, ການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ຕ້ອງຖືກດຳເນີນໂດຍສອດຄ່ອງກັບໂມສາອິກ (MOSAIC) 05.10, *ການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ.*

ການເກັບກຳຂໍ້ມູນເພີ່ມເຕີມ ຕ້ອງດຳເນີນໃນໄລຍະ, ແລະ ພາຍຫຼັງສຳເລັດການຈັດຕັ້ງຜປະຕິບັດແຜນປະຕິບັດງານແຫ່ງຊາດ (ກວດເບິ່ງຂໍ້ທີ 11 ສຳລັບຄຳແນະນຳ ກ່ຽວກັບການຕິດຕາມ, ການປະເມີນ ແລະ ການລາຍງານ).


© United Nations 2018 – All rights reserved

## 9.2 ການວິເຄາະ ແລະ ການພັດທະນາຄຸງການ

### 9.2.1 ການຮ່າງ

ຜົນ ແລະ ຂໍ້ສະເໜີແນະຈາກການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ຕ້ອງຄຳນຶງຄ່ຽງຄູ່ກັບບັນຫາຕ່າງໆທີ່ໄດ້ກຳນົດໄວ້ຫຼ່ວງໜ້າ, ເປັນຕົ້ນແມ່ນ: ຄວາມໝາຍໝັ້ນດ້ານນະໂຍບາຍຂອງລັດຖະບານ, ຄວາມໝາຍໝັ້ນຕໍ່ສົນທິສັນຍາສາກົນ ແລະ ຂໍ້ຈຳກັດທາງດ້ານຊັບພະຍາກອນ.

ຕ້ອງກຳນົດກຸ່ມຫຼັກ ເພື່ອນຳພາການຮ່າງແຜນປະຕິບັດງານແຫ່ງຊາດ. ກຸ່ມດັ່ງກ່າວ ອາດເອົາມາຈາກກົນໄກການປະສານງານແຫ່ງຊາດ (ກວດເບິ່ງຂໍ້ທີ 7.2).

ພາຍຫຼັງຮ່າງແຜນປະຕິບັດງານແຫ່ງຊາດ, ການປຶກສາຫາລື ຕ້ອງດຳເນີນ ໂດຍມີການເຂົ້າຮ່ວມຂອງພາກສ່ວນຫຼັກ ເພື່ອຮັບປະກັນໃຫ້ແຜນປະຕິບັດງານ

a) ສະທ້ອນເຖິງບູລິມະສິດແທ້ຈິງຂອງພົນລະເຮືອນ;

b) ແກ້ໄຂບັນຫາຕ່າງໆທີ່ໄດ້ກຳນົດໃນບົດສຳຫຼວດ ຢ່າງຖືກຕ້ອງ; ແລະ

c) ສ້າງການຍອມຮັບໃນການຈັດຕັ້ງປະຕິບັດແຜນປະຕິບັດງານ (ກວດເບິ່ງຂໍ້ທີ 9.3).

### 9.2.2 Prioritisation and sequencing

ຜູ້ຮ່າງແຜນປະຕິບັດງານແຫ່ວງຊາດ ຕ້ອງພິຈາລະນາການພົວພັນລະຫວ່າງຂົງເຂດຕ່າງໆຂອງບັນດາໂຄງການອາວຸດຂະໜາດນ້ອຍ ແລະ ເບົາ ແລະ ຄວາມສຳຄັນໃນການລຽນລຳດັບຂອງບັນດາຂໍ້ລິເລີ່ມຕ່າງໆຢ່າງເໝາະສົມ.

ໝາຍເຫດ: ລັກສະນະການພົວພັນລະຫວ່າງຂົງເຂດຕ່າງໆຂອງບັນດາໂຄງການອາວຸດຂະໜາດນ້ອຍ ແລະ ເບົາ ແມ່ນບໍ່ຄືກັນໃນແຕ່ລະສະພາບການຂອງແຕ່ລະປະເທດ. ຢ່າງໃດກໍຕາມ, ການພິຈາລະນາຈັດລຽນລຳດັບ ແລະ ການພົວພັນກັນ ແລະ ອາໄສເຊິ່ງກັນ ແລະ ກັນ ລະຫວ່າງບັນດາໂຄງການແຕ່ລະປະເພດ ໃນແຕ່ລະໄລຍະ.

ຕົວຢ່າງ: ບັນດາກິດຈະກຳຍົກສູງການຮັບຮູ້ ແມ່ນຈັດຂຶ້ນກ່ອນຫຼ່ວງໜ້າ ແລະ ໄລຍະການດຳເນີນໂຄງການເກັບຄືນອາວຸດ; ການປັບປຸງແປງນິຕິກຳ ອາດຈຳເປັນຕ້ອງດຳເນີນກ່ອນຫຼ່ວງໜ້າໂຄງການເກັບຄືນອາວຸດ.

ໃນການກຳນົດລຳດັບຂອງບັນດາຂໍ້ລິເລີ່ມ ແມ່ນໃຫ້ພິຈາລະນາຂໍ້ລິເລີ່ມທີ່ສາມາດເຫັນຜົນໄດ້ທັນທີ "quick wins" (ຕົວຢ່າງ: ຂໍ້ລິເລີ່ມ ທີ່ຄາດວ່າຈະມີຜົນຕອບຮັບທີ່ດີ ຢ່າງທັນທີ). ໃນທາງທິດສະດີ, ມາດຕະການດັ່ງກ່າວ ອາດບໍ່ແມ່ນບູລິມະສິດຕົ້ນຕໍ, ແຕ່ການສະແດງຜົນສຳເລັດຢ່າງທັນທີ ເປັນສິ່ງສຳຄັນໃນການສ້າງທ່ວງທາໃນທາງບວກ ແລະ ສ້າງການຍອມຮັບຕໍ່ແຜນປະຕິບັດງານ.

a) ລະດັບຂີດຄວາມສາມາດ ແລະ ຊັບພະຍາກອນທາງດ້ານເງິນທີ່ມີຢູ່;

b) ລະດັບຄວາມຕ້ອງການ;

c) ລະດັບຜົນກະທົບຂອງບັນດາກິດຈະກຳທີ່ໄດ້ຂຶ້ນແຜນ;

d) ຜົນສຳເລັດທີ່ເປັນໄປໄດ້; ແລະ

e) ຂໍ້ລິເລີ່ມ ຄວນເອົາໃຈໃສ່ຂົງເຂດດ້ານພູມສາດໃດສະເພາະ.

© United Nations 2018 – All rights reserved

## 9.3 ການປຶກສາຫາລື ແລະ ການເປັນເຈົ້າການ

### 9.3.1 ຈຸດປະສົງ

ການປຶກສາຫາລືແບບກ້ວາງຂວາງ ຕ້ອງດຳເນີນໃນໄລຍະການອອກແບບ ແລະ ສ້າງແຜນປະຕິບັດງານແຫ່ງຊາດ ເພື່ອ

a) ສ້າງການຍອມຮັບ ແລະ ເຈດຈຳນົງທາງການເມືອງ ເພື່ອການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ;

b) ສ້າງຄວາມສົນໃຈ ແລະ ຂົນຂວາຍການຊ່ວຍເຫຼືອ ເພື່ອຮັບປະກັນດ້ານງົບປະມານ;

c) ສອບຖາມ ແລະ ຮັບປະກັນຄວາມຖືກຕ້ອງຂອງການວິເຄາະ ແລະ ການນຳສະເໜີມາດຕະການ;

d) ແນະນຳການອອກແບບ ແລະ ເນື້ອໃນຂອງຮ່າງແຜນປະຕິບັດງານແຫ່ງຊາດ; ແລະ

e) ຍົກສູງການຮັບຮູ້ ກ່ຽວກັບເປົ້າໝາຍ ແລະ ຈຸດປະສົງຂອງແຜນປະຕິບັດງານ.

### 9.3.2 ພາກສ່ວນຫຼັກ

ອາດມີບາງຂະແໜງການ, ສະຖາບັນ, ກຸ່ມ ແລະ ບຸກຄົນທີ່ມີຄວາມສົນໃຈ ມີສ່ວນຮ່ວມໃນແຜນປະຕິບັດງານແຫ່ງຊາດ (ກວດເບິ່ງຂໍ້ທີ 7). ກົນໄກການປະສານງານປແຫ່ງຊາດ ຕ້ອງພົວພັນຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຕອນຕົ້ນຂອງຂະບວນການ ແລະ ຕ້ອງຮັກສາການປະສານງານຢ່າງປົກກະຕິ ແລະ ສະເໜີຕົ້ນສະເໜີປາຍ.

ການອອກແບບແຜນປະຕິບັດງານ ຕ້ອງເປັນຂະບວນການປຶກສາຫາລື ແບບປິດກ້ວາງ. ເພື່ອບັນລຸຄວາມຄາດໝາຍດັ່ງກ່າວ, ກົນໄກການປະສານງານແຫ່ງຊາດ ຕ້ອງ

a) ລິເລີ່ມການພົວພັນຮ່ວມມືແຕ່ຕົ້ນກັບບັນດາພາກສ່ວນ ທີ່ມີບົດບາດສຳຄັນໃນການໃຫ້ການສະໜັບສະໜູນດ້ານການເມືອງ, ການດຳເນີນງານ, ການເງິນ ແລະ ເຕັກນິກ ຕໍ່ແຜນປະຕິບັດງານ ຢ່າງຕໍ່ເນື່ອງ, ລວມທັງ

   1) ຜູ້ນຳທາງການເມືອງ ແລະຜູ້ທີ່ມີສິດຕັດສິນ,

   2) ເຈົ້າໜ້າທີ່ອາວຸໂສ ໃນບັນດາກະຊວງ, ກົມ ແລະ ຂະແໜງການພາກລັດ,

   3) ຄູ່ຮ່ວມມືດ້ານເຕັກນິກສາກົນ ແລະ ພາກພື້ນ, ແລະ

   4) ຜູ້ອຸປະທຳທີ່ເປັນໄປໄດ້ ແລະ ຄູ່ຮ່ວມຈັດຕັ້ງປະຕິບັດ; ແລະ

b) ປຶກສາຫາລື ແບບທາງການ ແລະ ບໍ່ເປັນທາງການ ກັບກຸ່ມທີ່ມີຄວາມສົນໃຈ ແລະ ມີສ່ວນຮ່ວມໃນ ຫຼື ໄດ້ຮັບຜົນກະທົບຈາກບັນດາກິດຈະກຳເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ລວມທັງລັດຖະບານ (ລະດັບຊາດ, ແຂວງ, ເມືອງ ແລະ ທ້ອງຖິ່ນ), ອົງການຈັດຕັ້ງພົນລະເຮືອນ ແລະ ພາກເອກະສົນ.

### 9.3.3 ໄລຍະສຳຄັນ ໃນການປຶກສາຫາລື

ການປຶກສາຫາລືກັບພາກສ່ວນຕ່າງໆ ຕ້ອງດຳເນີນເປັນແຕ່ລະໄລຍະ ໃນຊ່ວງການສ້າງແຜນປະຕິບັດງານ. ໄລຍະສຳຄັນ ທີ່ຕ້ອງດຳເນີນການປຶກສາຫາລື

 © United Nations 2018 – All rights reserved

c) ໃນໄລຍະເລີ່ມຕົ້ນຂຶ້ນແຜນຍຸດທະສາດ, ແລະ ການວາງເປົ້າໝາຍ ແລະ ຈຸດປະສົງ;

d) ໃນໄລຍະການຮ່າງແຜນປະຕິບັດງານແຫ່ງຊາດ; ແລະ

e) ໃນໄລຍະການຮັບຮອງຄວາມຖືກຕ້ອງຂອງແຜນປະຕິບັດງານແຫ່ງຊາດ.

ການປຶກສາຫາລືກັບປະຊາຊົນທົ່ວໄປ ຄວນດຳເນີນຜ່ານການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ (ກວດບເບິ່ງໂມສາອິກ (MOSAIC 05.10)). ການປຶກສາຫາລືເພີ່ມເຕີມກັບປະຊາຊົນ ໃນໄລຍະການອອກແບບແຜນປະຕິບັດງານ ສາມາດຈັດຂຶ້ນອີງຕາມຄວາມຕ້ອງການ, ຜ່ານການສຳພາດ, ການປຶກສາລືເປັນກຸ່ ແລະ ການປຶກສາຫາລືກັບປະຊາຊົນ.

## 9.4 ເນື້ອໃນຂອງແຜນປະຕິບັດງານແຫ່ງຊາດ

### 9.4.1 ພາກທົ່ວໄປ

ເນື້ອໃນຂອງແຜນປະຕິບັດງານແຫ່ງຊາດ ຄວນເປັນສິດຂອງປະເທດໃນການກຳນົດ. ເນື້ອໃນ ຕ້ອງສະທ້ອນເຖິງຄວາມຕ້ອງການ ແລະ ບູລິມະສິດ ກຳນົດຜ່ານການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ແລະ ການປຶກສາຫາລື ຈັດຂຶ້ນໃນໄລຍະການສ້າງແຜນປະຕິບັດງານແຫ່ງຊາດ.

### 9.4.2 ເນື້ອໃນທີ່ຖືກດັດປັບໃຫ້ເໝາະສົມ

ແຜນປະຕິບັດງານແຫ່ງຊາດ ສ້າງຂຶ້ນໃຫ້ປະເທດໃດໜຶ່ງຄວນມີເອກະລັກສະເພາະປະເທດນັ້ນ ແລະ ດັດປັບໃຫ້ເໝາະສົມ ເພື່ອແກ້ໄຂຄວາມຕ້ອງສະເພາະ. ໂຄງສ້າງເນື້ອໃນ ບໍ່ຄວນຮັບເອົາ ໂດຍບໍ່ມີການຊັ່ງຊາ ແລະ ດັດປັບໃຫ້ແທດເໝາະກັບສະພາບທ້ອງຖິ່ນຕົວຈິງ.

### 9.4.3 ຂົງເຂດວຽກງານ

ໂດຍອີງໃສ່ສະພາຍຕົວຈິງຂອງປະເທດ, ແຜນປະຕິບັດງານແຫ່ງຊາດ ອາດກວດເອົາບາງ ຫຼື ທຸກຂົງເຂດວຽກງານຕໍ່ໄປນີ້:

a) ການປະຕິຮູບດ້ານນິຕິກຳ, ກົດລະບຽບ ແລະ/ຫຼື ນະໂຍບາຍ, ລວມທັງກົດລະບຽບແຫ່ງຊາດ ກ່ຽວກັບ

   1) ການຜະລິດ,

   2) ການສົ່ງຄ່ຽນສາກົນ (ລວມທັງການຄຸ້ມຄອງຕົ້ນທາງ ແລະ ປາຍທາງ),

   3) ການເຂົ້າເຖິງອາວຸດຂະໜາດນ້ອຍ ແລະ ເບົາຂອງພົນລະເຮືອນ, ລວມທັງສ່ວນ, ອົງປະກອບ ແລະ ລູກປືນ, ແລະ

   4) ການຮ່ວມມືດ້ານກົດໝາຍສາກົນ, ການກະທຳຜິດທາງອາຍາ ແລະ ການສອບສວນ;

b) ການຄວບຄຸ້ມອຸປະທານ, ລວມທັງ

   1) ການຄຸ້ມຄອງການເກັບມ້ຽນ,

   2) ການໝາຍ ແລະ ບັນທຶກ,

   3) ການຕິດຕາມກວດກາອາວຸດຂະໜາດນ້ອຍ ແລະ ເບົາ,

   4) ການເກັບຄືນ ແລະ ການທຳລາຍອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ ແລະບໍ່ມີຄວາມຕ້ອງການ, ແລະ

© United Nations 2018 – All rights reserved 

5) ການຄຸ້ມຄອງຊາຍແດນ ແລະ ການຮ່ວມດ້ານການບັງຄັບໃຊ້ກົດໝາຍ;

c) ການຫຼຸດຜ່ອນອຸປະສົງ, ລວມທັງ

1) ການປັບປຸງຂະແໜງຄວາມໝັ້ນຄົງ,

2) ການປົດອາວຸດ, ແລະ ການກັບຄືນສູ່ສັງຄົມຂອງອາດີດນັກຕໍ່ສູ້,

3) ການຍົງສູງການຮັບຮູ້ ແລະ ການສຶກສາ,

4) ໂຄງການເພື່ອຄວາມໝັ້ນຄົງຂອງຊຸມຊົນ, ແລະ

5) ການພັດທະນາເສດຖະກິດ-ສັງຄົມ ແລະ ການດໍາຊີວິດແບບໃໝ່;

d) ການຊ່ວຍເຫຼືອ ແລະ ການສະໜັບສະໜູນຜູ້ທີ່ລອດຊີວິດ ແລະ ຜູ້ເຄາະຮ້າຍຈາກຄວາມຮຸນແຮງ; ແລະ

e) ໂຄງການຂ້າມຂະແໜງການ ແລະ ໂຄງການພິເສດ, ລວມທັງ

1) ການຄົ້ນຄ້ວາ,

2) ການສ້າງຂີດຄວາມສາມາດ ແລະ ການພັດທະນາ,

3) ການສື່ສານ ແລະ ການຄຸ້ມຄອງການສື່ສານ,

4) ຂະແໜງການຈັດຕັ້ງປະຕິບັດ ແລະ ໂຄງສ້າງ, ແລະ

5) ໂຄງການພິເສດ (ຕົວຢ່າງ: ເດັກຊາຍໜຸ່ມ, ເດັກ, ໄວ້ໜຸ່ມ, ຊວໜຸ່ມ, ແລະ ແມ່ຍິງ).

ເນື້ອໃນ ແລະ ຮູບແບບໃນການຈັດຕັ້ງປະຕິບັດບັນດາຂົງເຂດວຽກງານຂ້າງເທິງດັ່ງກ່າວ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ ຕ້ອງອີງໃສ່ຄໍາແນະນໍາ ຈາກຮູບແບບໂມສາອິກທີ່ກ່ຽວຂ້ອງ.

ຖ້າກ່ຽວຂ້ອງ, ບັນດາກິດຈະກໍາ ພາຍໃຕ້ຂົງເຂດວຽກງານຂ້າງເທິງ ຄວນກວມເອົາການພິຈາລະນາສະພາບການທີ່ແຕກຕ່າງ, ຄວາມຕ້ອງການ ແລະ ບູລິມະສິດຂອງແມ່ຍິງ, ຜູ້ຊາຍ, ເດັກຍິງ-ຊາຍ (ລວມທັງເດັກ, ໄວ້ໜຸ່ມ ແລະ ຊາວໜຸ່ມ) ທີ່ເປັນເປົ້າໝາຍ ແລະ/ຫຼື ຜູ້ທີ່ໄດ້ຮັບຜົນປະໂຫຍດ ຈາກແຜນປະຕິບັດງານແຫ່ງຊາດ (ກວດເບິ່ງຂໍ້ທີ 9.5.4)

ໝາຍເຫດທີ 1: ເອກະສານຊ້ອນທ້າຍ C ອະທິບາຍບລາຍລະອຽດຂົງເຂດວຽກງານຕ່າງໆ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.

ໝາຍເຫດທີ 2: ເອກະສານຊ້ອນທ້າຍ D ປະກອບບມີໂຄງສ້າງຂອງແຜນປະຕິບັດງານແຫ່ງຊາດ.

## 9.5 ການເຊື່ອມໂຍງເຂົ້າໃນບັນດານະໂຍບາຍ, ໂຄງການ ແລະ ຂະບວນການທີ່ກ່ຽວຂ້ອງ

### 9.5.1 ຄວາມກົມກ່ຽວ, ຄວາມສອດຄ່ອງ, ປະສິດທິຜົນ ແລະ ການເສີມສ້າງເຊິ່ງກັນ ແລະ ກັນ

ແຜນປະຕິບັດງານແຫ່ງຊາດ ຄວນຖືກອອກແບບ ເພື່ອສິ່ງເສີມຄວາມກົມກ່ຽວ ແລະ ປະສິດທິຜົນຂອງນະໂຍບາຍລັດຖະບານ ໃຫ້ຫຼາຍທີ່ສຸດເທົ່າເຮັດໄດ້ ແລະ ຕ້ອງສອດຄ່ອງກັບຈຸດປະສົງດ້ານຍຸດທະສາດແຫ່ງຊາດ.


© United Nations 2018 – All rights reserved

ການສົ່ງເສີມຄວາມກົມກ່ຽວ ແລະ ປະສິດທິຜົນໂດຍລວມໃຫ້ຫຼາຍທີ່ສຸດ ບໍ່ຄວນສົ່ງຜົນກະທົບໃນການບັນລຸເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ ຫຼື ເຮັດໃຫ້ການຈັດຕັ້ງປະຕິບັດແຜນປະຕິບັດງານມີຄວາມຫຼ້າຊ້າ. ມັນມີຄວາມຈຳເປັນ ທີ່ຈະຕ້ອງມີຄວາມສົມດຸນ ລະຫວ່າງເປົ້າໝາຍໃນການສົ່ງເສີມຄວາມກົມກ່ຽວ ແລະ ປະສິດທິຜົຂອງນະໂຍບາຍລັດຖະບານ ແລະ ການບັນລຸເປົ້າໝາຍຂອງແຜນປະຕິບັດງານແຫ່ງຊາດ.

ແຜນປະຕິບັດງານແຫ່ງຊາດ ສາມາດປະກອບມີບັນດາກິດຈະກຳ ຫຼື ວິທີທາງ ທີ່ມີຄວາມຄ້າຍື ຫຼື ກ່ຽວຂ້ອງກັບ - ແລະ ສາມາດອີງໃສ່ - ບັນດາກິດຈະກຳ ຫຼື ວິທີທາງທີ່ຖືກຈັດຕັ້ງປະຕິບັດ ໂດຍນະໂຍບາຍ ຫຼື ຂໍ້ລິເລີ່ມຂອງລັດຖະບານອື່ນ. ແຜນປະຕິບັດງານແຫ່ງຊາດ ອາດຈຳເປັນຕ້ອງມີການພົວພັນກັບບັນດານະໂຍບາຍ, ໂຄງການ ແລະ ຂະບວນການອື່ນໆ ເພື່ອສົ່ງເສີມຈຸດປະສົງ ແລະ ຂົວຂວາຍການສະໜັບສະໜູນທາງການເມືອງ ແລະ ງົບປະມານ.

ເພື່ອເປັນການສົ່ງເສີມຄວາມກົມກ່ຽວ, ຮັບປະກັນຄວາມສອດຄອ່ງ, ເພີ່ມປະສິດທິຜົນສູງສຸດ ແລະ ຍາດເອົາກາລະໂອກາດ, ແລະ ອາດເຊື່ອມສານແຜນປະຕິບັດງານ (ຫຼື ບາງພາກສ່ວນຂອງແຜນປະຕິບັດງານ) ເຂົ້າໃນນະໂຍບາຍ ແລະ ຂໍ້ລິເລີ່ມທີ່ກ່ຽວຈຂ້ອງຂອງລັດຖະບານ. ເພື່ອບັນລຸຄວາມຄາດໝາຍດັ່ງກ່າວ, ຜູ້ອອກແບບແຜນປະຕິບັດງານແຫ່ງຊາດ ຄວນ

a) ກຳນົດບັນດານະໂຍບາຍ ແລະ ຂໍ້ລິເລີມອື່ນໆ ທີ່ອາດກ່ຽວຂ້ອງ ຫຼື ພົວພັນແຜນປະຕິບັດງານແຫ່ງຊາດ;

b) ຮັບປະກັນວ່າ ບັນດາເປົ້າໝາຍ, ຈຸດປະສົງ ແລະ ວິທີທາງຂອງແຜນປະຕິບັດງານ ສອດຄ່ອງກັບບັນດານະໂຍບາຍ, ໂຄງການ ແລະ ຂະບວນການອື່ນໆ;

c) ກຳນົດຈຸດຂອງແຜນປະຕິບັດງານແຫ່ງຊາດ ທີ່ສາມາດເສີມສ້າງ, ທັບຊ້ອນກັບ ຫຼື ສົ່ງຜົນກະທົບຕໍ່ບັນດານະໂຍບານ ຫຼື ຂໍ້ລິເລີ່ມອື່ນໆ;

d) ຮັບປະກັນໂອກາດຈາກຜົນປະໂຫຍດຂອງປະສິດທິຜົນ - ໂດຍຍາດມາໄດ້ມາຈາກການແລກປ່ຽນຊັບພະຍາກອນ, ການປະສົມປະສານບັນດາກິດຈະກຳ ຫຼື ການອອກແບບຄືນໃໝ່ຂອງແຜນປະຕິບັດງານ.

ມາດຕະການ ຈັດຕັ້ງປະຕິບັດຜ່ານບັນດານະໂຍບາຍ ຫຼື ຂໍ້ລິເລີ່ມອື່ນໆ ສາມາດເສີມສ້າງຜົນຂອງບັນດາກິດຈະກຳ ຈັດຕັ້ງປະຕິບັດ ຜ່ານແຜນປະຕິບັດງານແຫ່ງຊາດ, ແລະ ເປັນປັດໄຈຂັ້ນພື້ນຖານທີ່ຈຳເປັນ ໃນການຂັບເຄື່ອນບັນດາກິດຈະກຳ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ.

ໃນຂະນະທີ່ມີການສົ່ງເສີມປະສິດທິຜົນ, ຄວາມກົມກ່ຽວ, ຄວາມສອດຄ່ອງ ແລະ ໂອກາດ ເພື່ອເສີມສ້າງເຊິ່ງກັນ ແລະ ກັນ ທົ່ວທຸກພາກສ່ວນຂອງລັດຖະບາຍ, ຜູ້ອອກແບບແຜນປະຕິບັດງານແຫ່ງຊາດ ອາດຈຳເປັນຕ້ອງພິຈາລະນາໄພຂົ່ມຂູ່ຕໍ່ຄວາມເປັນເອກະລາດ ແລະ ພາບພົດຂອງໂຄງການ ທີ່ອາດຂຶ້ນໄດ້ໃນຊ່ວງການປະສານງານ ແລະ ການເຊື່ອມໂຍງບັດດາແຜນປະຕິບັດງານ ພາຍໃຕ້ຂອບນະໂຍບາຍຂອງລັດຖະບານ. ການປານິປານອມ ອາດມີຄວາມຈຳເປັນໃນບາງຄັ້ງ ແຕ່ການປະສານງານ ແລະ/ຫຼື ການເຊື່ອມໂຍງເຂົ້າໃນບັນດານະໂຍບາຍ ຫຼື ຂໍ້ລິເລີ່ມອື່ນໆ ບໍ່ຄວນຫຼຸດຜ່ອນຄວາມສຳຄັນຂອງເປົ້າໝາຍໂດຍລວມຂອງແຜນປະຕິບັດງານແຫ່ງຊາດ.

### 9.5.2 ການເຊື່ອມໂຍງເຂົ້າໃນແຜນປະຕິບັດງານດ້ານຄວາມປອດໄພ ແລະ ຄວາມໝັ້ນຄົງ

ແຜນປະຕິບັດງານແຫ່ງຊາດ ອາດມີສ່ວນກ່ຽວຂ້ອງ ຫຼື ການພົວພັນກັບບາງຂົງເຂດສະເພາະຂອງນະໂຍບາຍ ຫຼື ແຜນປະຕິບັດງານດ້ານຄວາມປອດໄພ ແລະ ຄວາມໝັ້ນຄົງ, ລວມທັງ

a) ແຜນປະຕິບັດງານຄວາມປອດໄພຂອງຊຸມຊົນ;

b) ການປະຕິຮູບພາກສ່ວນຄວາມໝັ້ນຄົງ;

c) ການປົດອາວຸດ ແລະ ກັບຄືນສູ່ສັງຄົມຂອງອາດີກນັກຕໍ່ສູ້;

d) ການເກັບກູ້ລະເບີດ; ແລະ

e) ການຄຸ້ມຄອງຊາຍ.

© United Nations 2018 – All rights reserved 

### 9.5.3 ງົບປະມານແຫ່ງຊາດ ແລະ ຂອບວຽກການພັດທະນາ

ແຜນປະຕິບັດງານແຫ່ງຊາດ ຕ້ອງເຊື່ອມສານເຂົ້າໃນ ຫຼື ສອດຄ່ອງກັບບັນດາຍຸດທະສາດພັດທະນາແຫ່ງຊາດ.

**ໝາຍເຫດ:** ການເຊື່ອມສານແຜນປະຕິບັດງານແຫ່ງຊາດ ເຂົ້າໃນຂອບວຽກ ຫຼື ຍຸດທະສາດການພັດທະນາແຫ່ງຊາດ ແລະ ຂົນຂວາຍການສະໜັບສະໜູນຜ່ານງົບປະມານແຫ່ງຊາດ ຈະນຳໄປເຊິ່ງທັງຜົນປະໂຫຍດ ແລະ ສິ່ງທາທ້າຍ. ຜົນປະໂຫຍດຈາກການສະໜັບສະໜູນຜ່ານງົບປະມານແຫ່ງຊາດ ແມ່ນຈະເຮັດໃຫ້ງົບປະມານມີຄວາມຍືນຍົງກວ່າການສະໜັບສະໜູນຈາກຜູ້ອຸປະທຳສາກົນ, ທັງໃນໄລຍະສັ້ນ ເຖິງ ໄລຍະຍາວ. ການໄດ້ຮັບງົບປະມານແຫ່ງຊາດແມ່ນຈະເຮັດໃຫ້ແຜນປະຕິບັດງານແຫ່ງຊາດກ່າຍເປັນໝາກຜົນທາງການເມືອງ, ຊຶ່ງເປັນປັດໄຈສຳຄັນໃນການຮັບປະກັນຄວາມຍືນຍົງຂອງຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. ສິ່ງທາທ້າຍທີ່ມີຄວາມເປັນໄປໄດ້ ແມ່ນການແຂ່ງຂັນສູງ ເພື່ອຂົນຂວາຍເອົາງົບປະມານ ພາຍໃຕ້ງົບປະມານແຫ່ງຊາດ ແລະ ອາດຈະມີການປານີປານອມ ກ່ຽວກັບຈຳນວຍ ແລະ ຮູບແບບຂອງກິດຈະກຳ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ. ນອກຈາກນັ້ນ, ການຊ່ວຍເຫຼືອ ທີ່ໄດ້ມາຈາກຜູ້ອຸປະທຳສາກົນ ໂດຍກົງ ອາດຈະມີຄວາມຍືດຢຸ່ນຫຼາຍ ແລະ ສາມາດເຂົ້າເຖິງງ່າຍກວ່າການເຂົ້າເຖິງງົບປະມານແຫ່ງຊາດ. ໃນກໍລະນີຕ່າງຈາກນີ້, ການເອົາແຜນປະຕິບັດງານແຫ່ງຊາດ ເຂົ້າໃນງົບປະມານແຫ່ງຊາດ, ແລະ ຍຸດທະສາດການພັດທະນາແຫ່ງຊາດ, ສາມາດເປັນຂໍ້ກຳນົດເບື້ອງຕົ້ນ/ພື້ນຖານ ເພື່ອຮັບເອົາງົບປະມານຈາກຜູ້ອຸປທຳ ເນື່ອງຈາກວ່າ ແມ່ນຄວາມໝາຍໝັ້ນ ເພື່ອເຮັດໃຫ້ງົບປະມານມີຄວາມສອດຄ່ອງກັບບັນດາບູລິມະສິດແຫ່ງຊາດທີ່ໄດ້ມີການຕົກລົງກັນ. ມັດອາດຈະເປັນອຸປະສັກ, ເນື່ອງຈາກວ່າ ກົດລະບຽບ ແມ່ນອາດກີດກັ້ນບັນດກົມ ຈາກການຮັບເອົາງົບປະມານເພີ່ມເຕີມ ສຳລັບການຈັດຕັ້ງປະຕິບັດແຜນງານ ຈາກຜູ້ອຸປະທຳ ນອກເໜືອຈາກງົບປະມານ ທີ່ໄດ້ຖືກຈັດສັນພາຍໃຕ້ງົບປະມານແຫ່ງຊາດ, ເຖິງແມ່ນວ່າງົບປະມານແຫ່ງຊາດ ອາດບໍ່ພຽງພໍສຳລັບການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ໄດ້ຂຶ້ນແຜນໄວ້.

ຍຸດທະສາດດ້ານງົບປະມານ ສ້າງຂຶ້ນສຳລັບແຜນປະຕິບັດງານແຫ່ງຊາດ (ກວດເບິ່ງຂໍ້ທີ 8.4) ຕ້ອງກຳນົດວ່າ ຈະຂົນຂວາຍງົບປະມານຈາກງົບປະມານແຫ່ງຊາດແນວໃດ, ທັງໃນໄລຍະສັ້ນ ແລະ ໄບຍະຍາວ.

ຖ້າງົບປະມານ ໄດ້ມາຈາກງົບປະມານແຫ່ງຊາດ, ຜູ້ທີ່ນຳພາຂະບວນການແຜນປະຕິບັດງານແຫ່ງຊາດ ໂດຍໄວທີ່ສຸດ ຕ້ອງ

a) ພົວພັນກັບກຊວງການເງິນ (ຫຼື ທຽບເທົ່າ); ແລະ

b) ສ້າງຄວາມເຂົ້າໃຈ ກ່ຽວກັບຂະບວນການ (ລວມທັງວັນເວລາກຳນົດ) ໃນການຂົນຂວາຍການສະໜັບສະໜູນຜ່ານງົບປະມານແຫ່ງຊາດ.

ການຂົນຂວາຍການສະໜັບສະໜູນຜ່ານງົບປະມານແຫ່ງຊາດ ອາດຈະຕ້ອງໄດ້ມີການສະໜັບສະໜູນທາງການເມືອງ. ເພື່ອໃຫ້ໄດ້ການສະໜັບສະໜູນ, ການຍົກສູງການຮັບຮູ້ ກ່ຽວກັບແຜນປະຕິບັດງານແຫ່ງ ແມ່ນມີຄວາມຈຳເປັນ.

ໝາຍເຫດ: ຂະບວນການສ້າງ ແລະ ຕົກລົງ ກ່ຽວກັບເນື້ອໃນໂດຍລວມຂອງງົບປະມານແຫ່ງຊາດ, ຖ້າບໍ່ແມ່ນການຈັດສັນດ້ານງົບປະມານສະເພາະ, ອາດເປັນຂະບວນການມີໃຊ້ເວລາຫຼາຍພໍສົມຄວນ. ຂອບວຽກດ້ານງົບປະມານແຫ່ງຊາດ ແມ່ນກວມເອົາໄລຍະເວລາ. ການລິເລີ່ມຂະບວນການເຈລະຈາ ໃນໄລຍະຕົ້ນຂອງກາຍສ້າງແຜນປະຕິບັດງານ ຈະເປັນປັດໄຈສຳຄັນໃນການຮັບປະການການສະໜັບສະໜູນດ້ານງົບປະມານ.

ໝາຍເຫດທີ 2: ໃນຫຼາຍປະເທດ ທີ່ຮັບການຊ່ວຍເຫຼືອເພື່ອການພັດທະນາສາກົນ, ການຊ່ວຍເຫຼືອຈາກຜູ້ອຸປະທຳສາກົນ ແມ່ນໃຫ້ຜ່ານການສະໜັບສະໜູນດ້ານງົບປະມານໂດຍກົງ; ຊຶ່ງເປັນການປະກອບສ່ວນເຂົ້າໃນງົບປະມານແຫ່ງຊາດໂດຍລວມ ໂດຍບໍ່ແມ່ນການປະກອບສ່ວນສະເພາະເຂົ້າໃນໂຄງການໃດໜຶ່ງ. ຜົນຕາມມາຈາກຮູບແບບການໃຫ້ການຊ່ວຍເຫຼືອດັ່ງກ່າວ ແມ່ນ: (1) ຜູ້ອຸປະທຳສາກົນ ມີສ່ວນຮ່ວມໃນການເຈລະຈາກັບລັດຖະບານຂອງປະເທດທີ່ຮັບການຊ່ວຍເຫຼືອ ກ່ຽວກັບບັນດາບູລິມະສິດດ້ານງົບປະມານ (ໂດຍຜ່ານເອກະສານຍຸດທະສາດ ເພື່ອຫຼຸດຜ່ອນຄວາມທຸກຍາກ), ແລະ ສະນັ້ນ, ຈຶ່ງເຮັດໃຫ້ຜູ້ອຸປະທຳມີອິດທິພົນຕໍ່ເນື້ອໃນດ້ານງົບປະມານ; ແລະ (2) ຜູ້ອຸປະທຳສາກົນ ຈະມີງົບປະມານຈຳນວນໜ້ອຍ ສຳລັບໂຄງການຕ່າງອື່ນ ທີ່ຢູ່ນອກເໜືອແຜນ.

### 9.5.4 ແມ່ຍິງ, ເພດ, ເດັກ, ໄວໜຸ່ມ, ແລະ ຊາວໜຸ່ມ

ການຄ້າ, ການສະສົມ ແລະການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຜິດກົດໝາຍ ແມ່ນມີຜົນກະທົບທີ່ແຕກຕ່າງກັນຕໍ່ ແລະ ກ່ຽວພັນກັບຍິງ-ຊາຍ, ເດັກຍິງ-ຊາຍ, ຊຶ່ງທຸກຄົນລ້ວນແຕ່ມີບົດບາດໃນການແກ້ໄຂບັນຫາດັ່ງກ່າວ.

 © United Nations 2018 – All rights reserved

ແຜນປະຕິບັດງານແຫ່ງຊາດ ຕ້ອງແກ້ໄຂຄວາມຕ້ອງການຂອງກຸ່ມດັ່ງກ່າວ ໃນບັນດາຂົງເຂດວຽກງານທີ່ກ່ຽວຂ້ອງຕາມຄວາມເໝາະສົມ (ກວດເບິ່ງຂໍ້ທີ 9.4.3), ໂດຍສຸມໃສ່ການພິຈາລະນາທີ່ກ່ຽວຂ້ອງກັບແມ່ຍິງ, ເພດ, ເດັກ, ໄວ້ໜຸ່ມ ແລະ ຊາວໜຸ່ມ. ບັນດາອົງປະກອບຂອງແຜນປະຕິບັດງານແຫ່ງຊາດ ອາດສຸມໃສ່ສະເພາະກຸ່ມໃດໜຶ່ງ, ຕາມຄວາມເໝາະສົມ.

**ໝາຍເຫດ:** ສຳລັບຄຳແນະນຳເພີ່ມເຕີມ, ກວດເບິ່ງໂມສາອິກ (MOSAIC) 06.10, *ແມ່ຍິງ, ເພດ ແລະ ອາວຸດຂະໜາດນ້ອຍ ແລະ ເບົາ;* ແລະ ໂມສາອິກ (MOSAIC) 06.20, *ເດັກ, ໄວ້ໜຸ່ມ, ຊາວໜຸ່ມ ແລະ ອາວຸດຂະໜາດນ້ອຍ ແລະ ເບົາ.*

# 10 ການຈັດຕັ້ງປະຕິບັດ

## 10.1 ການປະສານງານ ແລະ ສະຖາບັນ

### 10.1.1 ກົນໄກການປະສານງານແຫ່ງຊາດ

ກົນໄກການປະສານງານແຫ່ງຊາດ ຕ້ອງນຳພາການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດໂດຍລວມ. ໃນການນຳພາດັ່ງກ່າວ, ກົນໄກການປະສານງານແຫ່ງຊາດ ຕ້ອງ

ກ) ສົ່ງເສີມການປະສານງານ, ການແລກປ່ຽນຂໍ້ມູນ ແລະ ການຄຸ້ມຄອງການພົວພັນ ລະຫວ່າງພາກສ່ວນຫຼັກ ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນປະຕິບັດງານ (ກວດເບິ່ງ ຂໍ້ທີ 7);

ຂ) ນຳພາການສ້າງ ແລະ ຕິດຕາມລາຍລະອຽດຂອງບັນດາແຜນກິດຈະກຳ;

ຄ) ສື່ສານຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານ, ລວມທັງ

  1) ການລາຍງານຕໍ່ຜູ້ບໍລິຫານອາວຸໂສ ໃນບັນດາກະຊວງ ແລະ ກົມຕ່າງໆຂອງລັດຖະບານ;

  2) ການລາຍງານຕໍ່ບັນດາຂະແໜງການສາກົນ, ພາກພື້ນ ແລະ ອະນຸພາກພື້ນທີ່ກ່ຽວຂ້ອງ; ແລະ

  3) ເຜີຍແຜ່ຂໍ້ມູນໃຫ້ປະຊາຊົນ;

ງ) ຮັບປະກັນການຄຸ້ມຄອງການເງິນ ໃຫ້ພຽງພໍ, ຊຶ່ງອາດສາມາດດຳເນີນພາຍໃນກົນໄກການປະສານງານແຫ່ງຊາດ ຫຼື ຜ່ານກະຊວງທີ່ຮັບຜິດຊອບວຽກງານດ້ານການເງິນ (ໃນທັງ 2 ກໍລະນີ, ກົນໄກການປະສານງານແຫ່ງຊາດ ຕ້ອງຕິດຕາມກວດກາການຄຸ້ມຄອງການເງິນ ແລະ ຮັບປະກັນວ່າ ການລາຍງານ ແມ່ນຖືກດຳເນີນຢ່າງທັນການ); ແລະ

ຈ) ນຳການຕິດຕາມ ແລະ ປະເມີນແຜນປະຕິບັດງານແຫ່ງຊາດ (ກວດເບິ່ງຂໍ້ທີ 11).

### 10.1.2 ອົງກອນ ແລະ ຂະແໜງການອື່ນໆ

ບັນດາກະຊວງ, ກົມ ແລະ ອົງການລັດຖະບານ, ແລະ ບັນດາຂະແໜງການຄູ່ຮ່ວມມືສາກົນ ແລະ ອົງການຈັດຕັ້ງພົນລະເຮືອນ ອາດນຳພາການຈັດຕັ້ງປະຕິບັດບາງສ່ວນຂອງແຜນປະຕິບັດງານແຫ່ງຊາດ. ໃນກໍລະນີດັ່ງກ່າວ, ພວກເຂົາ ອາດຮັບຜິດຊອບ

a) ນຳພາການວາງແຜນລາຍລະອຽດບັນດາກິດຈະກຳ ພາຍໃຕ້ຂົງເຂດຮັບຜິດຊອບສະເພາະ;

b) ປະກອບສ່ວນເຂົ້າໃນການສ້າງແຜນກິດຈະກຳຂອງ ແຜນປະຕິບັດງານແຫ່ງຊາດໂດຍລວມ;

c) ຄຸ້ມຄອງ-ບໍລິຫານການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆ ພາຍໃຕ້ຂົງເຂດຮັບຜິດຊອບສະເພາະ, ລວມທັງປະສານງານກັບພາກສ່ວນອື່ນໆ ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ; ແລະ

d) ລາຍງານຕໍ່ກົນໄກການປະສານງານແຫ່ງຊາດ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆ.

© United Nations 2018 – All rights reserved 

ບັນດາກະຊວງ, ກົມ ແລະ ອົງກອນລັດຖະລານ, ແລະ ບັນດາຂະແໜງການຄູ່ຮ່ວມມືສາກົນ ແລະ ອົງການຈັດຕັ້ງພົນລະເຮືອນ ອາດປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາກິດຈະກຳ ນຳພາໂດຍພາກສ່ວນອື່ນໆ.

### 10.1.3 ໂຄງຮ່າງ ແລະ ອົງການຈັດຕັ້ງຂອງສະຖານບັນ

ເພື່ອຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ອາດຈຳເປັນຕ້ອງມີກົນໄກການປະສານງານ, ຂະແໜງການ, ຄະນະກຳມະການ, ໜ່ວຍງານວິຊາການ ແລະ ສະຖາບັນ ທີ່ມີລັກສະນະກ້ວາງຂວາງ/ກວມເອົາຫຼາຍຂົງເຂດວຽກງານ. ກົນໄກດ້ານສະຖາບັນດັ່ງກ່າວ ແມ່ນສາມາດສ້າງຕັ້ງໃນລະດັບທ້ອງຖິ່ນ, ເມືອງ, ແຂວງ ແລະ ຊາດ.

ກົນໄກດັ່ງກ່າວ ສາມາດຊ່ວຍປະສານງານ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດຫຼາຍຂົງເຂດ ພາຍໃຕ້ແຜນປະຕິບັດງານ ໃນຊຸມຊົນ ຫຼື ແຂວງໃດໜຶ່ງສະເພາະ, ຫຼື ຊ່ວຍປະສານການຈັດຕັ້ງປະຕິບັດຂົງເຂດໃດໜຶ່ງສະເພາະ ພາຍໃຕ້ແຜນປະຕິງານແຫ່ງຊາດ.

ຕົວຢ່າງ: ຕົວຢ່າງ ກ່ຽວກັບແບບຂອງກົນໄກດ້ານສະຖາບັນ ທີ່ສາມາດຊ່ວຍປະສານການຈັດຕັ້ງປະຕິບັດບັນດາອົງປະກອບຂອງ ແຜນປະຕິບັດງານແຫ່ງຊາດ ລວມມີ

- ການສ້າງຕັ້ງຄະນະສະເພາະກິດ ລະຫວ່າງຫຼາຍຂະແໜງການລະດັບທ້ອງຖິ່ນ ຫຼື ແຂວງ, ໂດຍຖ່າຍຖອດຈາກອົງປະກອບຂອງ ກົນໄກການປະສານງານແຫ່ງຊາດ, ຊຶ່ງຮັບຜິດຊອບວຽກງານການວາງແຜນ ແລະ ປະສານງານການຈັດຕັ້ງປະຕິບັດທຸກອົງປະກອບຂອງແຜນປະຕິບັດງານແຫ່ງຊາດ ໂດຍສອດຄ່ອງກັບສະພາບທ້ອງຖິ່ນໃດໜຶ່ງສະເພາະ;

- ໝູນໃຊ້ຄະນະກຳມະການທ້ອງຄິ່ນທີ່ມີຢູ່ (ເຊັ່ນ: ຄະນະກຳມະການສັນຕິພາບ, ທີມງານສະເພາະກິດ ເພື່ອການພັດທະນາທ້ອງຖິ່ນ, ຂະແໜງການປ້ອງກັນຄວາມປອດໄພ ແລະ ຄວາມຍຸຕິທຳລະດັບທ້ອງຖິ່ນ, ອື່ນໆ) ເພື່ອຫຼຸ້ນບົດບາດໃນການວາງແຜນ ແລະ ປະສານການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ; ແລະ

- ໝູນໃຊ້ຂະແໜງການແຫ່ງຊາດທີ່ມີຢູ່ (ເຊັ່ນ: ຄະນະກຳມະການການປະສານງານ ລະຫວ່າງຂະແໜງການ ເພື່ອແກ້ໄຂບັນຫາຕ່າງໆ ເປັນຕົ້ນມ່ນການຄ້າມະນຸດ ແລະ ຢາເສັບຕິດ), ຊຶ່ງອາດສາມາດເຮັດໜ້າທີ່ຮັບຜິດຊອບການຄຸ້ມຄອງຊາຍແດນ ແລະ ສະກັດກັ້ນການຄ້າທີ່ຜິດກົດໝາຍ ທີ່ຖືກກຳນົດໄວ້ໃນແຜນປະຕິບັດງານແຫ່ງຊາດ.

ກົນໄກການປະສານງານແຫ່ງຊາດ ຕ້ອງນຳພາການກຳນົດໂຄງຮ່າງສະຖາບັນທີ່ເໝາະສົມ ເພື່ອສະໜັບສະໜູນ ແລະ ອຳນວຍໃຫ້ແກ່ການຈັດຕັ້ງປະຕິບັດທຸກອົງປະກອບຂອງແຜນປະຕິບັດງານແຫ່ງຊາດ ຢ່າງມີປະສິດທິພາບ ໃນທຸກລະດັບ.

ໂຄງຮ່າງທີ່ມີຢູ່ແລ້ວ ຕ້ອງຖືກນຳໃຊ້ໃນກໍລະນີທີ່ສາມາດສົ່ງເສີມຄວາມກົມກ່ຽວຂອງນະໂຍບາຍຂອງລັດຖະບານ ແລະ ປະສິດທິຜົນ, ແລະໃນກໍລະນີທີ່ວິທີທາງດັ່ງກ່າວ ຈະບໍ່ເຮັດໃຫ້ໂຄງຮ່າງອື່ນໆມີໜ້າທີ່-ຮັບຜິດຊອບເພີ່ມຂຶ້ນ ຫຼື ສົ່ງຜົນເຮັດໃຫ້ວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ຖືກຫຼຸດຄວາມສຳຄັນ ແລະ ໂຈະ.

ໃນກໍລະນີທີ່ມີຄວາມສ່ຽງໃນການເພີ່ມຄວາມໜັກໜ່ວງຕໍ່ໂຄງຮ່າງທີ່ມີຢູ່ ຫຼື ມີການໂຈະ ຫຼື ຫຼຸດຄວາມສຳຄັນຂອງວຽກງານການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ຫຼື ໃນກໍລະນີທີ່ບໍ່ມີຂະແໜງການທີ່ເໝາະສົມ, ອາດສ້າງຕັ້ງຂະແໜງການໃໝ່ ອາດຈະເປັນສະຖາບັນຊົ່ວຄາວ ໂດຍມີຈຸດປະສົງສະເພາະປະສານການຈັດຕັ້ງປະຕິບັດບັນດາກິດຈະກຳ ທີ່ຈະຖືກກຳນົດຂຶ້ນ, ຫຼື ເປັນສະຖາບັນໄລຍະຍາວ ແລະຖາວອນກໍ່ໄດ້.

## 10.2 ຂໍ້ມູນ ແລະ ການຮັບຮູ້ຂອງປະຊາຊົນ

ແຜນປະຕິບັດງານແຫ່ງຊາດ ອາດປະກອບມີບັນດາກິດຈະກຳແບບສະເພາະ ສຸມໃສ່ການສົ່ງເສີມການຮັບຮູ້ ແລະ ຄວາມເຂົ້າໃຈຂອງປະຊາຊົນກ່ຽວກັບຄວາມອັນຕະລາຍ ທີ່ຕິດພັນກັບການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ, ແລະ ບັນດາກິດຈະກຳ ທີ່ຈະຈັດຕັ້ງປະຕິບັດ ແນໃສ່ແກ້ໄຂບັນດາດັ່ງກ່າວ ພາຍໃຕ້ຂອບແຜນປະຕິບັດງານແຫ່ງຊາດ.

ນອກນັ້ນ, ບັນດາກິດຈະກຳ ຕ້ອງຖືກຈັດຕັ້ງປະຕິບັດ ເພື່ອຍົກສູງການຮັບຮູ້ ແລະ ສົ່ງເສີມຄວາມສົນໃຈ ແລະ ການສະໜັບສະໜູນຕໍ່ແຜນປະຕິບັດງານແຫ່ງຊາດ ໂດຍລວມ.

ການເປີດຕົວກິດຈະກຳເບື້ອງຕົ້ນ, ເປັນຕົ້ນແມ່ນ ອາດມີການຈັດກອງປະຊຸມແຫ່ງຊາດ ເພື່ອປຶກສາຫາລື ກ່ຽວກັບແຜນປະຕິບັດງານແຫ່ງສາດ.


© United Nations 2018 – All rights reserved

ຕ້ອງມີການສື່ສານ ແບບປົກກະຕິ ກ່ຽວກັບການຈັດຕັ້ງແຜນປະຕິບັດງານດັ່ງກ່າວ - ລວມທັງບັນດາກິດຈະກຳ ທີ່ຖືກຈັດຕັ້ງປະຕິບັດສຳເລັດແລ້ວ ແລະ ຜົນຂອງການຈັດຕັ້ງປະຕິບັດບັນດາກິດຈະກຳດັ່ງກ່າວ, ລວມທັງກິດຈະກຳຕໍ່ໄປ. ການສື່ສານ ຕ້ອງແມ່ນຂະບວນການສອງທາງ ແລະ ອະນຸຍາດການປຶກສາຫາລືກັບປະຊາຊົນ.

ບັນດາກິດຈະກຳ ເພື່ອຍົກສູງການຮັບຮູ້ ທີ່ຕິດພັນກັບແຜນປະຕິບັດງານແຫ່ງຊາດ ຕ້ອງຖືກດຳເນີນການ ໂດຍສອດຄ່ອງກັບໂມສາອິກ (MOSAIC) 04.30, *ການຍົກສູງການຮັບຮູ້ ກ່ຽວກັບຄວາມຈຳເປັນໃນການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ.*

## 11 ການຕິດຕາມ, ການປະເມີນ ແລະ ການລາຍງານ

### 11.1 ພາກທົ່ວໄປ

ແຜນປະຕິບັດງານແຫ່ງຊາດ ຄວນລວມມີບົດບັນບັດສຳລັບ

a) ການຕິດຕາມການຈັດຕັ້ງປະຕິບັດ;

b) ການປະເມີນຜົນການຈັດຕັ້ງປະຕິບັດ; ແລະ

c) ລາຍງານຜົນສຳເລັດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຍາດມາໄດ້;

ໂດຍອີງໃສ່ໂມສາອິກ (MOSAIC) 04.40, *ການຕິດຕາມ, ການປະເມີນ ແລະ ການລາຍງານ*

ຂະບວນການຕິດຕາມ ແລະ ການປະເມີນແຜນປະຕິບັດງານແຫ່ງຊາດ ຕ້ອງອີງໃສ່ແຫຼ່ງຕ່າງໆທີ່ກ່ຽວຂ້ອງຈາກຫຼາຍຂົງເຂດເທົ່າທີ່ເປັນໄປໄດ້, ລວມທັງ

d) ພາກສ່ວນຈັດຕັ້ງປະຕິບັດ;

e) ເປົ້າໝາຍທີ່ຄາດໝາຍໄວ້;

f) ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ຄາດໝາຍໄວ້; ແລະ

g) ແຫຼ່ງດາຕ້າທາງສະຖິຕິ ທີ່ສາມາດວັດແທກຕົວຊີ້ບອກທີ່ກ່ຽວຂ້ອງກັບແຜນປະຕິບັດງານແຫ່ງຊາດ.

### 11.2 ການຕິດຕາມ

ການຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ທີ່ກຳລັງດຳເນີນຢູ່ ແລະ ແບບປົກກະຕິ ຄວນຖືກດຳເນີນໃນໄລຍະການຈັດຕັ້ງປະຕິບັດແຜນປະຕິບັດງານ. ການຕິດຕາມບັນດາກິດຈະກຳ ຄວນວັດແທກວ່າ ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ

ກ) ດຳເນີນໄປຕາມຂອບໄລຍະເວລາທີ່ໄດ້ຖືກກຳນົດໄວ້ ໃນລະດັບໃດ;

ຂ) ຍັງຢູ່ພາຍໃນງົບປະມານທີ່ໄດ້ຖືກກຳນົດໄວ້ ໃນລະດັບໃດ;

ຄ) ປະຊາຊົນໂດຍລວມ ເຫັນພາບ, ເຂົ້າໃຈ ແລະ ສະໜັບສະໜູນໃນລະດັບໃດ;

ງ) ປ່ຽນແປງພຶດຕິກຳຂອງກຸ່ມເປົ້າໝາຍ ໃນລະດັບໃດ; ແລະ

ຈ) ບັນລຸຄາດໝາຍຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ ໃນລະດັບໃດ.

© United Nations 2018 – All rights reserved

ກົນໄກການປະສານງານແຫ່ງຊາດ (ຫຼື ຂະແໜງການອື່ນ ທີ່ໄດ້ຖືກແຕ່ງຕັ້ງ ໃຫ້ຕິດຕາມການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ) ຄວນ

ສ) ໄດ້ຮັບແຈ້ງໃນເວລາອັນໄວອັນທີ່ສຸດ ກ່ຽວກັບຂໍ້ບົກຜ່ອງ ທີ່ກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ; ແລະ

ຊ) ດຳເນີນການເພື່ອແກ້ໄຂຂໍ້ບົກຜ່ອງ, ລວມທັງປັບປຸງອົງປະກອບຕ່າງໆຂອງແຜນປະຕິບັດງານ ຕາມຄວາມຈຳເປັນ, ເພື່ອອຳນວຍໃຫ້ແກ່ການບັນລຸເປົ້າໝາຍ ແລະ ຈຸດປະສົງຂອງແຜນປະຕິບັດງານ.

## 11.3 ການປະເມີນ

ພາຍຫຼັງການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ຄວນປະເມີນຜົນກະທົບໂດຍລວມຂອງການຈັດຕັ້ງປະຕິບັດດັ່ງກ່າວ.

ການປະເມີນ ຕ້ອງຖືກດຳເນີນໂດຍຜູ້ຊ່ຽວຊານ ຫຼື ອົງກອນເອກະລາດ ທີ່ບໍ່ມີສ່ວນຮ່ວມໃນການອອກແບບ ຫຼື ຈັດຕັ້ງປະຕິບັດແຜນປະຕິບັດງານ. ການປະເມີນຕ້ອງ

ກ) ວັດແທກຂອບເຂດໃນການບັນລຸເປົ້າໝາຍ ແລະ ຈຸດປະສົງຂອງແຜນປະຕິບັດງານ;

ຂ) ເນັ້ນໜັກຜົນກະທົບຂອງແຜນປະຕິບັດງານ ທີ່ມີຄວາມເຈດຈຳນົງ ແລະ ບໍ່ມີຄວາມເຈດຈຳນົງ;

ຄ) ຈຳແນກ ລະຫວ່າງການເຂົ້າຮ່ວມໃນ ແລະ ຜົນກະທົບຂອງແຜນປະຕິບັດງານ ຕໍ່ຍິງ-ຊາຍ, ແລະ ເດັກນ້ອຍ, ໄວໜຸ່ມ ແລະ ຊາວໜຸ່ມ;

ງ) ວິເຄາະສິ່ງທ້າທາຍທີ່ປະເຊີນ ໃນການຈັດຕັ້ງປະຕິບັດແຜນປະຕິບັດງານ ແລະ ຄວາມຫຍຸ້ງຍາກ ໄດ້ຖືກຂ້າມຜ່ານ ຫຼື ບໍ່ໄດ້ຖືກຂ້າມຜ່ານຄືແນວໃດ; ແລະ

ຈ) ກຳນົດບົດຮຽນຈາກຂະບວນການຈັດຕັ້ງປະຕິບັດແຜນປະຕິບັດງານ.

## 11.4 ການລາຍງານ

### 11.4.1 ການບລາຍງານແຫ່ງຊາດ

ພາຍຫຼັງສຳເລັດການປະເມີນການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ, ຜົນ ຕ້ອງໄດ້ຖືກເຜີຍແຜ່ໃນບົດລາຍງານ ແລະ ເຜີຍແຜ່ໃຫ້

a) ລັດຖະບານ;

b) ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ;

c) ປະຊາຊົນທົ່ວໄປ; ແລະ

d) ຜູ້ອຸປະທຳ ທີ່ໄດ້ສະໜັບສະໜູນການອອກແບບ, ການຈັດຕັ້ງປະຕິບັດ ແລະ/ຫຼື ການປະເມີນແຜນປະຕິບັດງານ.

### 11.4.2 ການລາຍງານສາກົນ

ພາຍໃຕ້ແຜນປະຕິບັດງານສະຫະປະຊາຊາດ (ສປຊ) ເພື່ອຕ້ານການຄ້າອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ, ລັດຖະບານກ່ຽວຂ້ອງ ຕ້ອງໄດ້ລາຍງານສະຫະປະຊາຊາດ (ສປຊ)

ກ) ການຕັດສິນໃຈ ເພື່ອລິເລີ່ມຂະບວນການສ້າງແຜນປະຕິບັດງານແຫ່ງຊາດ;

ຂ) ຄວາມຄືບໜ້າໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ; ແລະ

ຄ) ຜົນກະທົບຂອງແຜນປະຕິບັດງານແຫ່ງຊາດ ພາຍຫຼັງລິເລີ່ມການຈັດຕັ້ງ.

 © United Nations 2018 – All rights reserved

ບັນດາບົດລາຍງານດັ່ງກ່າວ ອາດເປັນສ່ວນໜຶ່ງຂອງການລາຍງານແບບປົກກະຕິຂອງລັດຖະບານ ຕໍ່ ອົງການສະຫະປະຊາຊາດ (ສປຊ) ກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດງານສະຫະປະຊາຊາດ (ສປຊ) ແລະ ນິຕິກຳ ວ່າດ້ວຍການຕິດຕາມກວດກາ.

ການລາຍງານ ກ່ຽວກັບການຕັດສິນໃຈຂອງລັດຖະບານ ເພື່ອລິເລີ່ມຂະບວນການສ້າງແຜນປະຕິບັດງານແຫ່ງຊາດ ອາດລວມມີການສະເໜີການຮ່ວມມື ແລະ ການຊ່ວຍເຫຼືອສາກົນ - ທັງທາງດ້ານເຕັກນິກ ແລະ ງົບປະມານ - ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານ.

© United Nations 2018 – All rights reserved 

## ເອກະສານຊ້ອນທ້າຍ A
(ຂໍ້ມູນ)

## ແບບຢ່າງຂອງບັນດາຈຸດປະສົງ ສໍາລັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ

ກ) ຫຼຸດຜ່ອນຈໍານວຍຜູ້ບາດເຈັບ ແລະ ເສຍຊີວິດໂດຍລວມ ທີ່ເກີດຈາກອາວຸດຂະໜາດນ້ອຍ ແລະ ເບົາ, ລວມທັງການຄາດຕະກໍາ, ການຂ້າຕົວຕາຍ ແລະ ອຸບັດຕິເຫດ;

a) Reduce the number of crimes in which small arms or light weapons are used.

ຂ) ຫຼຸດຜ່ອນຈໍານວຍອາຊະຍາກໍາ ທີ່ມີການນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ;

ຄ) ຫຼຸດຜ່ອນຈໍານວນຂອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ກຸ່ມກໍ່ອາຊະຍາກໍາ, ກຸ່ມກໍ່ການຮ້າຍ ແລະ ກຸ່ມຕິດອາວຸດທີ່ບໍ່ແມ່ນລັດ ສາມາດເຂົ້າເຖິງໄດ້;

b) Reduce the of small arms and light weapons to the illicit market.

ງ) ຫຼຸດຜ່ອນຈໍານວນຂອງອາວຸດຂະໜາດນ້ອຍ ແລະ ເບົາ ທີ່ເຂົ້າໄປໃນຕະຫຼາດທີ່ຜິດກົດໝາຍ;

ຈ) ໃຫ້ປະຊາຊົນຮັບຮູ້ເຖິງຄວາມອັນຕະລາຍຂອງການຄ້າ, ການສະສົມ ແລະ ການນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ;

ສ) ສົ່ງເສີມຄວາມຮັບຮູ້ຂອງປະຊາຊົນ ກ່ຽວກັບບັນຫາ ແລະ ການສ້າງວິທີຮັບມື ທີ່ມີຊຸມຊົນເປັນຜູ້ຂັບເຄື່ອນ ເພື່ອແກ້ໄຂບັນຫາ;

ຊ) ຄວບຄຸ້ມອາວຸດຂະໜານນ້ອຍທີ່ຖືກົດໝາຍ ຜ່ານກົດໝາຍ, ກົດລະບຽບ ແລະ ຂັ້ນຕອນການບໍລິຫານ ຢ່າງມີປະສິດຕິພາບ;

ຍ) ສ້າງໂຄງສ້າງດ້ານນິຕິກໍາແຫ່ງຊາດ ເພື່ອຕ້ານການຄ້າ, ການສະສົມ ແລະ ການນໍາໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ;

ດ) ເກັບຄືນອາວຸດຂະໜາດນ້ອຍ ແລະ ເບົາທີ່ຜິດກົດໝາຍ ແລະ ບໍ່ມີຄວາມຕ້ອງການ ຈາກຊຸມຊົນ;

ຕ) ກູ້ຄືນອາວຸດຂະໜາດນ້ອຍ ແລະ ເບົາ ທີ່ຖືກລັກລອບ/ຖືກປຸ້ນ ຈາກຊຸມຊົນ;

ຖ) ຫຼຸດຜ່ອນການເຂົ້າເຖິງພາບຂອງອາວຸດຂະໜາດນ້ອຍ ແລະ ເບົາໃນຊຸມຊົນ ເພື່ອທໍາລາຍວັດທະນາທໍາແຫ່ງຄວາມຮຸນແຮງ ແລະ ສົ່ງເສີມວັດທະນາທໍາແຫ່ງສັນຕິພາບ;

ທ) ສົ່ງເສີມຄວາມເຂົ້າໃຈກ່ຽວກັບຄວາມໝັ້ນຄົງໃນຊຸມຊົນ;

ນ) ສົ່ງເສີມການລົງທຶນ, ການສ້າງວຽກເຮັດງານທໍາ ແລະ ການພັດທະນາ.


© United Nations 2018 – All rights reserved

# ເອກະສານຊ້ອນທ້າຍ B
(ຂໍ້ມູນ)

# ການພິຈາລະນາງົບປະມານ

In developing a funding strategy for a National Action Plan there are a number of issues that may be considered:

ການສ້າງຍຸດທະສາດດ້ານງົບປະມານ ສຳລັບແຜນປະຕິບັດງານແຫ່ງຊາດ ອາດຕ້ອງໄດ້ພິຈະລະນາຫຼາຍບັນຫາ:

## 1. ແຫຼ່ງງົບປະມານ

ມີຫຼາຍແຫຼ່ງງົບປະມານ ທີ່ຜູ້ຂຶ້ນແຜນ ອາດສາມາດນຳເອົາໄປພິຈາລະນາ ໃນເວລາຊອກຫາການສະໜັບສະໜູນທາງດ້ານງົບປະມານ ສຳລັບແຜນປະຕິບັດງານແຫ່ງຊາດ. ແຫຼ່ງເຫຼົ່ານີ້ ລວມມີ:

ກ) ເງິນຈັດສັນໃນການສ້າງ ຫຼື ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຈາກງົມປະມານສາຍລັດຖະບານທີ່ມີຢູ່;

ຂ) ການຈັດສັນໃຫມ່ຈາກງົບປະມານລັດຖະບານ (ຈາກງົບປະມານສາຍພິເສດ ຫຼື ງົບປະມານສາຍປົກກະຕິ). ແຜນປະຕິບັດງານແຫ່ງຊາດ ອາດປະກອບມີຫົວຂໍ້ດ້ານງົບປະມານໂດຍລວມ ຫຼື ອາດມີບາງອົງປະກອບຂອງແຜນປະຕິບັດງານ ອາດປະກອບມີຫົວຂໍ້ສະເພາະດ້ານງົບປະມານ ຫຼື ຫຼາຍກວ່າໜຶ່ງຫົວຂໍ້ດ້ານງົບປະມານ;

ຄ) ງົບປະມານ ຈາກການຊ່ວຍເຫຼືອເພື່ອການພັດທະນາສາກົນ;

ງ) ງົບປະມານໂຄງການ ຈາກອົງການຈັດຕັ້ງສາກົນ (ຕົວຢ່າງ: ອົງການ ສປຊ); ແລະ

ຈ) ງົບປະມານໂຄງການ ຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.

## 2. ການເຂົ້າເຖິງງົບປະມານ

ສຳລັບແຕ່ລະແຫຼ່ງງົບປະມານ ທີ່ໄດ້ກຳນົດໄວ້ໃນຂ້າງເທິງ ແມ່ນມີບັນຫາຈຳນວນໜຶ່ງປິ່ນອ້ອມການເຂົ້າເຖິງງົບປະມານ ທີ່ຜູ້ຂຶ້ນແຜນອາດຈຳເປັນຕ້ອງໄດ້ພິຈາລະນາ ໃນການສ້າງຍຸດທະສາດດ້ານງົບປະມານ. ບັນຫາດັ່ງກ່າວ ແມ່ນລວມມີ

ກ) ຄົ້ນຄ້ວາຂະບວນການໃນການເຂົ້າເຖິງງົບປະມານ ຈາກແຫຼ່ງຕ່າງໆທີ່ໄດ້ຖືກກຳນົດໄວ້, ລວມທັງການກຳນົດເວລາຂອງຂະບວນການຕັດສິນການຈັດສັນງົບປະມານ;

ຂ) ກຳນົດຈຳນວນງົບປະມານທີ່ມີຢູ່, ບັນດາກິດຈະກຳ ແລະ ໂຄງການ ທີ່ສາມາດຈັດສັນງົບປະມານ ແລະ ໄລຍະເວລາໃນການນຳໃຊ້ງົບປະມານ ໃນການຈັດຕັ້ງປະຕິບັດ;

ຄ) ກຳນົດຂໍ້ຈຳກັດ ແລະ ເງື່ອນໄຂຂອງງົບປະມານ, ລວມທັງການລາຍງານຄວາມຕ້ອງການ; ແລະ

ງ) ຕິດຕໍ່ພົວພັນກັບຜູ້ຈັດການດ້ານງົບປະມານ ເພື່ອສົ່ງເສີມຄວາມເຂົ້າໃຈ ກ່ຽວກັບເປົ້າໝາຍ, ຈຸດປະສົງ ແລະ ຄວາມຕ້ອງການທາງດ້ານງົບປະມານ ສຳລັບຂະບວນການແຜນປະຕິບັດງານແຫ່ງຊາດ.

## 3. ການຄຸ້ມຄອງງົບປະມານ

© United Nations 2018 – All rights reserved

ຍຸດທະສາດດ້ານງົບປະມານ ອາດກຳນົດວ່າຈະຄຸ້ມຄອງງົບປະມານແນວໃດ, ແມ່ນໃຜຈະປັນຜູ້ລະດົມງົບປະມານ ແລະ ເຮັດບັນຊີ, ແລະ ຕ້ອງການຄວາມສາມາດແບບໃດ (ແລະ ຈະພັດທະນາຄວາມສາມາດນີ້ແນວໃດ ຖ້າຫາກຍັງຂາດຄວາມສາມາດທີ່ຈຳເປັນ) ເພື່ອຄຸ້ມຄອງງົບປະມານຂອງ ແຜນປະຕິບັດງານແຫ່ງຊາດ ຢ່າງມີປະສິດທິພາບ.

## 4. ການຈັດລຳດັບຄວາມສຳຄັນ

ຍຸດທະສາດດ້ານງົບປະມານ ອາດກຳນົດວ່າອົງປະກອບແຕ່ລະຢ່າງຂອງ ການສ້າງ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ ຈະຕ້ອງໄດ້ຖືກຈັດລຳດັບຄວາມສຳຄັນຄືແນວໃດ (ຈະມີການຕັດສິນແນວໃດ ໂດຍອີງໃສ່ເງື່ອນໄຂໃດ ແລະ ແມ່ນໃຜເປັນຜູ້ຕັດສິນ?) ໃນກໍລະນີ ທີ່ບໍ່ມີງົບປະມານ ສຳລັບທຸດອົງປະກອບຂອງແຜນປະຕິບັດງານ.


© United Nations 2018 – All rights reserved

# ເອກະສານຊ້ອນທ້າຍ C
(ຂໍ້ມູນ)

## ຂົງເຂດວຽກງານ ສຳລັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ

The matrix below provides an overview of the possible functional areas that a National Action Plan may include (the list is not exhaustive). The description in the 'coverage' column provides an indicative (i.e. not exhaustive or definitive) outline of the types of issues and activities that may be included within each functional area.

ຕາຕະລາງລຸ່ມນີ້ ນຳສະເໜີພາບລວມກ່ຽວກັບຂົງເຂດວຽກງານຕ່າງໆ ທີ່ແຜນປະຕິບັດງານແຫ່ງຊາດ ສາມາດເອົາເຂົ້າໃນບັນຊີ (ບັນຊີ ບໍ່ແມ່ນບັນຊີທີ່ສົມບູນແບບ). ລາຍລະອຽດໃນຖັນ "ຂອບເຂດ" ນຳສະເໜີລາຍລະອຽດ (ບໍ່ແມ່ນລາຍອຽດສົມບູນແບບ ຫຼື ຕາຍຕົວ) ເພື່ອເປັນຕົວຊີ້ບອກປະເພດຂອງບັນຫາ ແລະ ກິດຈະກຳ ທີ່ສາມາດເອົາເຂົ້າໃນຂົງເຂດວຽກງານ.

| ຂົງເຂດວຽກງານ | | ຂອບເຂດ |
|---|---|---|
| ນະໂຍບາຍ ແລະ ກົດໝາຍ | *ນະໂຍບາຍ* | ການສ້າງເອກະສານທາງການ (ຖ້າເປັນໄປໄດ້ ຄວນອີງໃສ່ຜົນການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ) ເພື່ອກຳນົດທິດທາງທາງການເມືອງ ແລະ ຈຸດປະສົງດ້ານຍຸດທະສາດ ເພື່ອຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແລະ ຕີກອບຂອບເຂດຂອງການຈັດຕັ້ງປະຕິບັດໂຄງການ. ເອກະສານ ອາດຖືກສ້າງຂຶ້ນ ເພື່ອເປັນຂັ້ນຕອນເບື້ອງຕົ້ນໃນການສ້າງແຜນປະຕິບັດງານແຫ່ງຊາດ ຫຼື ຂັ້ນຕອນທຳອິດໃນການຈັດຕັ້ງປະຕິບັດ. |
| | *ການປັບປຸງທາງດ້ານນິຕິກຳ ແລະ ກົດລະບຽບ* | ທົບທວນ, ປັບປຸງ ແລະ ປະກາດໃຊ້ກົດໝາຍ, ກົດລະບຽບ ແລະ ຂັ້ນຕອນການບໍລິການ ເພື່ອ<br>• ແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ (ເປັນຕົ້ນແມ່ນ: ການເຂົ້າເຖິງຂອງພົນລະເຮືອນ, ການຜະລິດ, ການຄ້າພາຍໃນ, ການສິ່ງຂຽນສາກົນ, ການເຮັດເຄື່ອງໝາຍ ແລະ ການບັນທຶກ, ການຄຸ້ມຄ້ອງການເກັບມ້ຽນ, ແລະ ອື່ນໆ);<br>• ການມອບໝາຍພັນທະ-ໜ້າທີແກ່ສະຖາບັນ (ຕົວຢ່າງ: ຄະນະກຳມະການແຫ່ງຊາດ ແລະ ກົນໄກການປະສານງານແຫ່ງຊາດ ວ່າດ້ວຍອາວຸດຂະໜາດນ້ອຍ ແລະ ເບົາ, ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ); ແລະ<br>• ສະໜັບສະໜູນບັນດາຂໍ້ລິເລີ່ມ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ (ຕົວຢ່າງ: weapons amnesties integrated into collection programmes)<br>ຂົງເຂດວຽກງານດັ່ງກ່າວ ແມ່ນພື້ນຖານອັນສຳຄັນໃຫ້ແກ່ການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. |
| ການຄວບຄຸ້ມອຸປະທານ | *ການຄຸ້ມຄອງການເກັບມ້ຽນ* | ຄວາມປອດໄພຂອງການເກັບມ້ຽນອາວຸດ ແລະ ລູກປືນແຫ່ງຊາດ, ລວມທັງອາວຸດ ແລະ ລູກປືນ ທີ່ຖືກຄອບຄອງໂດຍກຳລັງຕິດອາວຸດ, ຂະແໜງການບັງຄັບໃຊ້ກົດໝາຍ, ຜູ້ຄ້າອາວຸດຂະໜາດນ້ອຍ ແລະ ເບົາ ແລະ ບໍລິສັດຮັກສາຄວາມປອດໄພເອກະຊົນ. |

© United Nations 2018 – All rights reserved

| ຂົງເຂດວຽກງານ | | ຂອບເຂດ |
|---|---|---|
| | *ການເກັບຄືນ ແລະ ການທຳລາຍ* | ການລົບລ້າງ ແລະ ຈຳກັດອາວຸດຂະໜາດນ້ອຍ ແລະ ເບົາ ແລະ ລູກປືນ ທີ່ຜິດກົດໝາຍ, ບໍ່ຕ້ອງການ, ໃຊ້ການບໍ່ໄດ້ ແລະ ເປັນສ່ວນເກີນອອກຈາກລະບົບໄຫຼວຽນຂອງຕະຫຼາດ. |
| | *ການຄຸ້ມຄອງຊາຍແດນ ແລະ ການຮ່ວມມືໃນການບັງຄັບໃຊ້ກົດໝາຍ* | ຮັດແໜ້ນການຄຸ້ມຄອງການເຄື່ອນຍ້າຍຂອງອາວຸດຂະໜາດນ້ອຍ ແລະ ເບົາ ແລະ ລູກປືນ ຕາມຊາຍແດນສາກົນ (ທາງບົກ, ອາກາດ ແລະ ນ້ຳ) ແລະ ສະກັດກັ້ນການຄ້າທີ່ຜິດກົດໝາຍ. |
| ການຫຼຸດຜ່ອນອຸປະສົງ | *ການປັບປຸງຂະແໜງການຄວາມປອດໄພ* | ຂົງເຂດຂອງບັນດາຂໍ້ລິເລີ່ມທີ່ເປັນໄປໄດ້ ແມ່ນເພື່ອເສີມຂະຫຍາຍປະສິດທິພາບ, ປະສິດທິຜົນ, ຄວາມຮັບຜິດຊອບ ແລະ ຄວາມເປັນມືອາຊີບຂອງພາກສ່ວນກ່ຽວຂ້ອງ ແລະ ມາດຕະການຕ່າງໆ ໃນຂະແໜງການວຽກງານຄວາມປອດໄພ ແລະ ຄວາມຍຸຕິທຳ ແນໃສ່ແກ້ໄຂສາເຫດພື້ນຖານທີ່ກໍ່ມໃຫ້ເກີດຄວາມຮຸນແຮງ ແລະ ຄວາມບໍ່ມີຄວາມໝັ້ນຄົງທີ່ຕິດພັນກັບການຄ້າ: ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ. |
| | *ການສົ່ງເສີມການຮັບຮູ້ ແລະ ການສຶກສາສາທາລະນະ* | ການສົ່ງເສີມການຮັບຮູ້ ກ່ຽວກັບຄວາມອັດຕະລາຍ ທີ່ຕິດພັນກັບການຄ້າ, ການສະສົມ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ ແບບຜິດກົດໝາຍ, ແລະ ມາດຕະການຕ່າງໆ ທີ່ສາມາດຈັດຕັ້ງປະຕິບັດໄດ້ ເພື່ອຫຼຸດຜ່ອນບັນຫາເຫຼົ່ານັ້ນ. ການສຶກສາສາທາລະນະ ເພື່ອແຈ້ງ ແລະ ສົ່ງເສີມຄວາມເຂົ້າໃຈ ກ່ຽວກັບບັນຫາທີ່ຕິດພັນກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ, ໂດຍສະເພາະ ແມ່ນເພື່ອປູກຝັງການປ່ຽນແປງທັດສະນະ ແລະ ພາກປະຕິບັດ ໄລຍະຍາວ ກ່ຽວກັບຄວາມຮຸນແຮງທາງດ້ານອາວຸດ ແລະ ອາວຸດຂະໜາດນ້ອຍ ແລະ ເບົາ. |
| | *ໂຄງການຄວາມປອດໄພຂອງຊຸມຊົນ* | ບັນດາຂໍ້ລິເລີ່ມ ທີ່ເກີດຈາກຊຸມຊົນທ້ອງຖິ່ນ ແລະ ຄວາມຕ້ອງການຂອງຊຸມຊົນ ເພື່ອສົ່ງເສີມຄວາມປອດໄພ ແລະ ຄວາມໝັ້ນຄົງພາຍໃນຊຸມຊົນ. ໃນໄລຍະສັ້ນ-ຍາວ ຂໍ້ລິເລີ່ມດັ່ງກ່າວ ອາດສາມາດແກ້ໄຂສາເຫດພື້ນຖານ ທີ່ກໍ່ໃຫ້ເກີດຄວາມຮຸນແຮງ ແລະ ຄວາມບໍ່ໝັ້ນຄົງ ທີ່ຕິດພັນກັບອາວຸດຂະໜາດນ້ອຍ ແລະ ເບົາ ແລະ ສົ່ງເສີມການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. |
| | *ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດໃນຮູບແບບໃໝ່* | ແກ້ໄຂສາເຫດພື້ນຖານທາງດ້ານເສດຖະກິດ-ສັງຄົມ ທີ່ກໍ່ໃຫ້ເກີດຄວາມຮຸນແຮງ ແລະ ຄວາມບໍ່ໝັ້ນຄົງ ທີ່ຕິດພັນກັບອາວຸດຂະໜາດນ້ອຍ ແລະ ເບົາ. ບັນດາຂໍ້ລິເລີ່ມດັ່ງກ່າວ ອາດເຊື່ອມໂຍງ ຫຼື ບໍ່ເຊື່ອມໂຍງກັບບັນດາຂໍ້ລິເລີ່ມ ວ່າດ້ວຍການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ເປັນຕົ້ນແມ່ນ ໂຄງການເກັບຄືນ ແລະ ການທຳລາຍ. ຂໍ້ລິເລີ່ມ ເພື່ອການດຳລົງຊີວິດໃນຮູບແບບໃໝ່ ແມ່ນເນັ້ນໃສ່ຊຸມຊົນ ທີ່ມີການເປັນຢູ່ທາງດ້ານເສດຖະກິດທີ່ຕິດພັນກັບການຄອບຄອງ ແລະ ການນຳໃຊ້ອາວຸດຂະໜາດນ້ອຍ ແລະ ເບົາ, ແລະ ຊອກຫາວິທີທາງໃໝ່ໃນການສ້າງລາຍຮັບ ໂດຍບໍ່ອາໄສການຄອບຄອງອາວຸດ. |
| ການໃຫ້ການຊ່ວຍເຫຼືອແກ່ຜູ້ລອດຊີວິດ ແລະ ຜູ້ເຄາະຮ້າຍ | *ການສະໜັບສະໜູນຜູ້ເຄາະຮ້າຍ* | ຂໍ້ລິເລີ່ມ ເພື່ອສະໜັບສະໜູນຜູ້ທີ່ໄດ້ຮັບຜົນກະທົບທາງກາຍ, ທາງຈິດ ແລະ/ຫຼື ທາງເສດຖະກິດ ຈາກຄວາມຮຸນແຮງດ້ານອາວຸດຂະໜາດນ້ອຍ ແລະ ເບົາ. |


© United Nations 2018 – All rights reserved

| ຂົງເຂດວຽກງານ | | ຂອບເຂດ |
|---|---|---|
| | | |
| ໂຄງການຂ້າມຂະແໜງການ ແລະ ໂຄງການພິເສດ | *ການຄົ້ນຄ້ວາ* | ບັນຫາທີ່ຖືກລະບຸໃນການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ຫຼື ການສອບສວນທີ່ມີລາຍລະອຽດ; ການຄົ້ນຄ້ວາ ເພື່ອສະໜັບສະໜູນບັນດາຂໍ້ລິເລີ່ມ ພາຍໃຕ້ແຜນປະຕິບັດງານແຫ່ງຊາກ; ແລະ ການຄົ້ນຄ້ວາເພີ່ມເຕີມ ດັ່ງທີ່ໄດ້ກຳນົດໄວ້ໃນໄລຍະການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດ. |
| | *ການສ້າງຂີດຄວາມສາມາດ / ການພັດທະນາ* | ບັນດາຂໍ້ລິເລີ່ມ ເພື່ອພັດທະນາຄວາມສາມາດຂອງຊັບພະຍາກອນມະນຸດ ແລະ ວັດສະດຸ ແບບຍືນຍົງ ແລະ ພື້ນບ້ານ (ຕົວຢ່າງ: ໂຄງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໃຫ້ແກ່ສະມາຊິກຂອງກົນໄກການປະສານງານແຫ່ງຊາດ; ການຝຶກອົບຮົມທາງດ້ານເຕັກນິກໃນການທຳລາຍອາວຸດ, ແລະ ອື່ນໆ). |
| | *ການຄຸ້ມຄອງການສື່ສານ ແລະ ຂໍ້ມູນ* | ແລກປ່ຽນຂໍ້ມູນ ກັບພາກສ່ວນກ່ຽວຂ້ອງພາຍໃນ, ພາກພື້ນ ແລະ ສາກົນ, ລວມທັງຄວາມຮັບຜິດຊອບໃນການລາຍງານ. ຄຸ້ມຄອງດາຕ້າ ແລະ ຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ການຄົ້ນຄ້ວາ. |
| | *ຂະແໜງງານ ແລະ ໂຄງສ້າງໃນການຈັດຕັ້ງປະຕິບັດ* | ການສ້າງຕັ້ງ ແລະ ການພັດທະນາຂະແໜງການ ແລະ ໂຄງສ້າງ ທີ່ຈະຈັດຕັ້ງປະຕິບັດບັນດາກິດຈະກຳຂອງແຜນປະຕິບັດງານແຫ່ງຊາດ. ວຽກງານດັ່ງກ່າວ ອາດລວມມີການສ້າງຕັ້ງຄະນະກຳມະການລະຫວ່າງຂະແໜງການທ້ອງຖິ່ນ ແລະ ການພັດທະນາຂະແໜງການລະດັລທ້ອງຖິ່ນ ແລະ ລະດັບຊາດທີ່ມີຢູ່ ເພື່ອເຮັດໜ້າທີ່ຈັດຕັ້ງປະຕິບັດບັນດາກິດຈະກຳການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ. |
| | *ໂຄງການພິເສດ* | ໂຄງການ ທີ່ມີເປົ້າເນັ້ນໃສ່ກຸ່ມຄົນ ຫຼື ບັນຫາສະເພາະ ເຊັ່ນ: ເພດ, ແມ່ຍິງ, ຊາວໜຸ່ມ, ໄວໜຸ່ມ ແລະ ເດັກນ້ອຍ. ບັນດາໂຄງການເຫຼົ່ານີ້ມີວາລະຂ້າມຂະແໜງການ (ຕິດພັນກັບຫຼາຍຂະແໜງການ), ສະໜັບສະໜູນການເຊື່ອມສານບັນດາດັ່ງກ່າວ ເຂົ້າໃນຂົງເຂດ ພາຍໃຕ້ແຜນປະຕິບັດງານແຫ່ງຊາດ, ແລະ ເຊື່ອມໂຍງບັນດາຂໍ້ລິເລີ່ມຂອງແຜນປະຕິບັດງານແຫ່ງຊາດ ເຂົ້າໃນບັນດາຂໍ້ລິເລີ່ມອື່ນໆ, ເປັນຕົ້ນແມ່ນ: ຂໍ້ລິເລີ່ມ **"ຕົວເມືອງທີ່ເປັນມິດຕໍ່ເດັກນ້ອຍ"** ຂອງ UNICEF. ນອກນັ້ນ, ອາດລວມມີບັນດາຂໍ້ລິເລີ່ມໃໝ່ຕ່າງຫາກ. |

© United Nations 2018 – All rights reserved

# ເອກະສານຊ້ອນທ້າຍ D
(ຂໍ້ມູນ)

## ໂຄງຮ່າງແຜນປະຕິບັດງານແຫ່ງຊາດ

ໂຄງຮ່າງນີ້ (ປັບປຸງຈາກໂຄງຮ່າງແຜນປະຕິບັດງານແຫ່ງຊາດ SEESAC) ແມ່ນແບບຢ່າງ ກ່ຽວກັບໂຄງສ້າງຂອງແຜນປະຕິບັດງານແຫ່ງຊາດ. ໂຄງຮ່າງນີ້ ປະກອບມີຕົວຊີ້ບອກ ກ່ຽວກັບຈຸດປະສົງການດຳເນີນງານ, ກິດຈະກຳ, ຂະແໜງການ/ພາກສ່ວນນຳພາການຈັດຕັ້ງປະຕິບັດ ແລະ ຂອບໄລຍະເວລາໃນການຈັດຕັ້ງປະຕິບັດ, ຊຶ່ງເປັນຕົວແບບຈາກຂົງເຂດວຽກງານທີ່ເປັນໄປໄດ້. ແຜນປະຕິບັດງານແຫ່ງຊາດແຕ່ລະສະບັບ ຈະແຕກຕ່າງກັນ; ໃນຂອບເຂດຂອງຂົງເຂດວຽກງານ, ການຮ່າງຈຸດປະສົງ, ກິດຈະກຳທີ່ຈະຈັດຕັ້ງປະຕິບັດ, ຂະແໜງການກ່ຽວຂ້ອງ ແລະ ຂອບໄລຍະເວລາ.

| ຂົງເຂດວຽກງານ | ຈຸດປະສົງຂອງການດຳເນີນງານ | ກິດຈະກຳ | ຂະແໜງການ/ພາກສ່ວນນຳພາ | ໄລຍະເວລາ | ໝາຍເຫດ |
|---|---|---|---|---|---|
| ການປັບປຸງດ້ານນິຕິກຳ ແລະ ກົດລະບຽບ | ເພື່ອຮັບປະກັນຄວາມສອດຄ່ອງກັບກົດໝາຍແຫ່ງຊາດ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ໂດຍມີຄວາມໝາຍໝັ້ນທາງພາກພື້ນ ແລະ ສາກົນ | ສ້າງຄະນະກຳມະການຮ່າງກົດໝາຍ | ກະຊວງພາຍໃນ / ຫ້ອງການໄອຍະການ | ສຳເລັດໃນເດືອນທີ 3 | |
| | | ກວດກາກົດໝາຍທີ່ມີ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ ແລະ ກຳນົດຄວາມແຕກໂຕນ ແລະ ຊ່ອງຫວ່າງທາງກົດໝາຍ | | ສຳເລັດໃນເດືອນທີ 5 | |
| | | ຮ່າງນິຕິກຳສະບັບປັງປຸງ ກ່ຽວກັບການຄຸ້ມຄອງອາວຸດຂະໜາດນ້ອຍ ແລະ ເບົາ | | ສຳເລັດໃນເດືອນທີ 12 | |
| ໂຄງການວ່າດ້ວຍຄວາມປອດໄພຂອງຊຸມຊົນ | ສ້າງ ແລະ ຈັດຕັ້ງປະຕິບັດແຜນງານຄວາມປອດໄພຂອງຊຸມຊົນ ໃນ 6 ເຂດຊຸມຊົນທີ່ເປັນບູລິມະສິດ | ທົບທວນດາຕ້າການສຳຫຼວດອາວຸດຂະໜາດນ້ອຍ ແລະ ເບົາ ແລະ ລົງສະໜາມດຳເນີນການປະເມີນ ເພື່ອກຳນົດ 6 ເຂດຊຸມຊົນບູລິມະສິດ | ກົນໄກການປະສານງານແຫ່ງຊາດ | ສຳເລັດໃນເດືອນທີ 3 | |
| | | ກຳນົດພາກສ່ວນທ້ອງຖິ່ນ, ສ້າງຕັ້ງຂະບວນການປຶກສາຫາລື ແລະ ສ້າງແຜນງານ | ກົນໄກການປະສານງານແຫ່ງຊາດ / ຊຸມຊົນທ້ອງຖິ່ນ / ຫົວໜ້າຊຸມຊົນ | ສຳເລັດໃນເດືອນທີ 8 | |
| | | ຈັດຕັ້ງປະຕິບັດແຜນງານ ໃນ 6 ເຂດ | ຫົວໜ້າຊຸມຊົນທ້ອງຖິ່ນ | ສຳເລັດໃນເດືອນທີ 9 ຫາ 24 | |
| ການຄຸ້ມຄອງການເກັບມ້ຽນ | ອື່ນໆ | | | | |
| | ອື່ນໆ | | | | |


© United Nations 2018 – All rights reserved

| | | | | | |
|---|---|---|---|---|---|
| ການສ້າວຂີດຄວາມສາມາ / ການພັດທະນາ | | | | | |
| ການເກັບຄືນ ແລະ ທໍາລາຍ | ອື່ນໆ | | | | |

© United Nations 2018 – All rights reserved

# Bibliography


## United Nations

1. UN. *Integrated Disarmament, Demobilization and Reintegration Standards*. New York: United Nations, 2006 (particularly Module 4.11, *small arms and light weapons control, security and development*).

2. UNDP. *How to Guide: The Establishment and Functioning of National Small Arms and Light Weapons Commissions*. Geneva: United Nations Development Programme, 2008

3. UNDP. *Securing Development: UNDP's support for addressing small arms issues*. Geneva: United Nations Development Programme, 2005.

4. UNIDIR. *Implementing the UN Programme of Action on Small Arms and Light Weapons: Analysis of the National Reports Submitted by States 2002-2008*. Geneva: United Nations Institute for Disarmament Research, 2008.

## International & Regional Organizations

5. INTERPOL / SARPCCO. Standard Operating Procedures for the implementation of the SADC Protocol on the Control of Firearms, Ammunition and other related materials. Windhoek: INTERPOL Sub-regional Bureau for Southern Africa & Secretariat of the Southern African Regional Police Chiefs Cooperation Organization, 2007.

6. OECD. *Armed Violence Reduction: Enabling Development*. Paris: Organisation for Economic Cooperation and Development, 2009.

7. OECD. *OECD-DAC Handbook on Security System Reform: Supporting security and justice*. Paris: Organisation for Economic Cooperation and Development, 2007.

8. OSCE. *Handbook of Best Practices on Small Arms and Light Weapons*. Vienna: Organisation for Security and Co-operation in Europe, 2003.

9. RECSA. *Best Practice Guidelines for the Implementation of the Nairobi Declaration and Nairobi Protocol on Small Arms and Light Weapons*. Nairobi: Regional Centre on Small Arms in the Great Lakes Region, the Horn of Africa and Bordering States, 2005

10. SEESAC. *Management of small arms and light weapons Programmes (RMDS/G 04.10).* Belgrade: South-East and Eastern European Clearinghouse for the Control of Small Arms and Light Weapons, 2006.

11. SEESAC. Small arms and light weapons National Commissions (RMDS/G 3.10). Belgrade: South East and Eastern Europe Clearinghouse for the Control of Small Arms and Light Weapons, 2006.

## Other Sources

12. BITING THE BULLET / IANSA. *Reviewing Action on Small Arms 2006: Assessing the First Five Years of the UN Programme of Action*. London: Biting the Bullet / International Action Network on Small Arms, 2006.


© United Nations 2018 – All rights reserved

13. CHD. Missing Pieces: A Guide for Reducing Gun Violence through Parliamentary Action. Geneva: Centre for Humanitarian Dialogue, 2007.

14. CONFLICT SENSITIVITY CONSORTIUM. *Conflict Sensitive Approaches to Development, Humanitarian Assistance and Peacebuilding: A Resource Pack*. Conflict Sensitivity Consortium: London: 2004.

15. POTGIETER, J and URQUHART, A. *Resolving Small Arms Proliferation: The Development and Implementation of National Action Plans on Arms Management and Disarmament*. Pretoria and London: Safer Africa and Saferworld, 2003.

16. UGANDA. *Mapping the small arms problem in Uganda: The development of Uganda's National Action Plan on Small Arms and Light Weapons*. Kampala: Uganda National Focal Point on Small Arms and Light Weapons, 2007.

© UN CASA 2016 – All rights reserved